# ວິໄສທັດການພັດທະນາອຸດສະຫະກໍາ ໃນເຂດອະນຸພາກພື້ນແມ່ນ້ຳຂອງ (ສະບັບຮ່າງ)
# ~ເພື່ອກາຍເປັນ ຈຸດໃຈກາງຂອງເຄືອຄ່າຍຕ່ອງໂສ້ມູນຄ່າໃນພາກພື້ນອາຊີ ແລະ ພາກພື້ນອື່ນໆ~

## 1. ສະພາບການປະຈຸບັນ ໃນເຂດອຸນະພາກພື້ນແມ່ນ້ຳຂອງ

- ອະນຸພາກພື້ນແມ່ນ້ຳຂອງ ປະກອບດ້ວຍ 5 ປະເທດ ທີ່ມີແຜ່ນດິນຕິດຈອດກັນ ໂດຍມີຄວາມຫຼາກຫຼາຍທາງດ້ານວັດທະນະທຳ ແລະ ລະດັບການພັດທະນາທີ່ແຕກຕ່າງກັນ. <u>ອະນຸພາກພື້ນແມ່ນ້ຳຂອງ ແມ່ນພາກພື້ນໜຶ່ງທີ່ມີຄວາມເຕີບໂຕທາງເສດຖະກິດທີ່ໝັ້ນທ່ຽງ; ຈຳນວນປະຊາກອນໃນພາກພື້ນ ປະກອບສ່ວນຕໍ່ການເພີ່ມຂຶ້ນຂອງກຳລັງແຮງງານ, ແລະ ການຂະຫຍາຍຕົວຂອງບໍລິມາດການບໍລິໂພກ ພາຍໃນພາກພື້ນ. ການເຊື່ອມໂຍງທາງສະຖາບັນ ກໍ່ຄື ບຸກຄົນ ມີລັກສະນະເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຊິ່ງໄດ້ຮັບແຮງຂັບເຄື່ອນ ຈາກການພັດທະນາ ພື້ນຖານໂຄງລ່າງຂັ້ນພື້ນຖານ ແລະ ການເຊື່ອມໂຍງລະດັບພາກພື້ນ ເພື່ອກ້າວໄປສູ່ປະຊາຄົມເສດຖະກິດອາຊຽນ (AEC).</u> ເພື່ອແກ້ໄຂສິ່ງທ້າທາຍຕ່າງໆ, ອະນຸພາກພື້ນແມ່ນ້ຳຂອງໄດ້ດຶງດູດ ການລົງທຶນຈາກທົ່ວໂລກ, ແນໃສ່ຫັນປ່ຽນໃຫ້ພາກພື້ນ ກາຍເປັນຖານການຜະລິດ, ຖານການສົ່ງອອກ ແລະ ຕະຫຼາດຜູ້ບໍລິໂພກທີ່ມີທ່າກ້າວຂະຫຍາຍຕົວ.

  - ➢ ສະມາຊິກສະພາການຄ້າ ຂອງປະເທດຍີ່ປຸ່ນ ແລະ ພາກອຸດສະຫະກຳ ໃນປະເທດອະນຸພາກພື້ນແມ່ນ້ຳຂອງ ມີທ່າກ້າວຂະຫຍາຍຕົວຢ່າງຕໍ່ເນື່ອງ ນັບແຕ່ປີ 2012 ເປັນຕົ້ນມາ; ນອກເໜືອຈາກອຸດສະຫະກຳການຜະລິດແລ້ວ, ອຸດສະຫະກຳການບໍລິການຂອງຍີ່ປຸ່ນຈຳນວນໜຶ່ງ ເປັນຕົ້ນແມ່ນ ການຂາຍຍ່ອຍ, ຮ້ານອາຫານ ແລະ ການຂົນສົ່ງ ກໍ່ເປັນໜຶ່ງໃນການລົງທຶນ ໃນອະນຸພາກພື້ນແມ່ນ້ຳຂອງ. ການລົງທຶນຕ່າງປະເທດ ເຊັ່ນ ການລົງທຶນຈາກປະເທດຈີນ, ສາທາລະນະລັດເກົາຫຼີ ແລະ ສະຫະລັດອາເມລິກາ ກໍ່ມີຈຳນວນເພີ່ມຂຶ້ນເຊັ່ນກັນ ນັບແຕ່ປີ 2010 ເປັນຕົ້ນມາ.

  - ➢ ທີ່ຕັ້ງທາງພູມສາດຂອງອະນຸພາກພື້ນແມ່ນ້ຳຂອງ ໄດ້ສົ່ງຜົນປະໂຫຍດປະກອບສ່ວນເຮັດໃຫ້ ອະນຸພາກພື້ນມີຄວາມເຕີບໂຕ ໂດຍຜ່ານການຄ້າທີ່ມີທ່າກ້າວຂະຫຍາຍຕົວ ແລະ ການຄ້າຮ່ວມກັບປະເທດຈີນ ແລະ ອິນເດຍ (ຕົວຢ່າງ: ການເພີ່ມຂຶ້ນຂອງບໍລິມາດການຄ້າ ລະຫວ່າງ ພາກໄຕ້ຂອງປະເທດຈີນ ແລະ ຫວຽດນາມ).

- ກ່ຽວກັບ ການສ້າງອະນຸພາກພື້ນແມ່ນ້ຳຂອງໃຫ້ກາຍເປັນຕະຫຼາດດຽວ, ຫົວໜ່ວຍທຸລະກິດ ໄດ້ດຳເນີນການວິເຄາະຢ່າງລະອຽດ ກ່ຽວກັບ ຈຸດອ່ອນ ແລະ ທ່າແຮງຂອງແຕ່ລະປະເທດ ເຊັ່ນ: ຄຸນນະພາບ ແລະ ອຸບປະທານຂອງກຳລັງແຮງງານ, ທ່າແຮງຂອງຕະຫຼາດ, ອຸບປະທານຂອງພະລັງງານ ແລະ ຊັບພະກອນທຳມະຊາດທີ່ມີ, ຄວາມສະດວກໃນການເຂົ້າເຖິງ ແລະ ການເຊື່ອມຕໍ່ຈາກ ພາຍໃນ ແລະ ພາຍນອກ ອະນຸພາກພື້ນແມ່ນ້ຳຂອງ, ແລະ ຄັດເລືອກປາຍທາງການລົງທຶນ ທີ່ມີຄວາມພ້ອມຫຼາຍກວ່າ ເພື່ອຂະຫຍາຍຕ່ອງໂສ້ປະລິມານ

ການຄ້າຂ້າມແດນ (ລາຍລະອຽດ ກ່ຽວກັບ ຈຸດອ່ອນ ແລະ ທ່າແຮງຂອງແຕ່ລະປະເທດ ໄດ້ລະບຸໄວ້ໃນເອກະສານຊ້ອນທ້າຍ).

- ປະເທດໄທ, ເຊິ່ງເປັນປະເທດໃຈກາງຂອງອະນຸພາກພື້ນ, ແມ່ນປະເທດທີ່ມີຄວາມອຸດົມສົມບູນທາງດ້ານອຸດສະຫະກຳ ພ້ອມທັງຖານສະໜັບສະໜູນອຸດສະຫະກຳ ທີ່ກວ້າງຂວາງ, ພ້ອມທັງມີຕ່ອງໂສ້ອຸບປະທານດ້ານອຸດສະຫະກຳທີ່ທັນສະໄໝ ແລະ ອຸດສະຫະກຳຂັ້ນພື້ນຖານ, ເຊິ່ງປະກອບມີຫົວໜ່ວຍທຸລະກິດຂະໜາດນ້ອຍ, ກາງ ແລະ ຂະໜາດໃຫ່ຍ. ນອກນັ້ນ, ຍັງມີທ່າແຮງຂອງນະໂຍບາຍ "ປະເທດໄທ ບວກ ໜຶ່ງ" ສໍາລັບການລົງທຶນ ເຊິ່ງກຳລັງເປັນຮູບເປັນຮ່າງ ບົນພື້ນຖານການຍົກລະດັບອຸດສະຫະກຳຂອງປະເທດໄທ, ການຫັນປ່ຽນການຜະລິດອຸດສະຫະກຳ ທີ່ອີງໃສ່ແຮງງານເປັນຕົ້ນຕໍ ໄປສູ່ປະເທດເພື່ອນບ້ານໄກ້ຄຽງ ພາຍໃນອະນຸພາກພື້ນແມ່ນ້ຳຂອງ. ຄຽງຄູ່ກັບທ່າອ່ຽງຂອງນະໂຍບາຍ "ປະເທດຈີນ ບວກ ໜຶ່ງ", "ປະເທດໄທ ບວກໜຶ່ງ" ກໍາລັງເພີ່ມທະວີ ການຂະຫຍາຍຕ່ອງໂສ້ອຸບປະທານ ອອກນອກປະເທດ ແລະ ການຫັນເປັນປະເທດອຸດສະຫະກຳຕົ້ນຕໍ ຂອງປະເທດກຳປູເຈຍ, ສປປ ລາວ ແລະ ມຽນມ້າ. ການຂະຫຍາຍຕົວ ຂອງຕ່ອງໂສ້ອຸບປະທານ ດັ່ງກ່າວນີ້ ກຳລັງຢູ່ໃນທ່າກ້າວຂະຫຍາຍຕົວ ແລະ ໄດ້ເລີ່ມຕົ້ນເຊື່ອມຕໍ່ ຕ່ອງໂສ້ອຸບປະທານ ທີ່ກຳລັງພັດທະນາໃນພາກເໜືອ, ພາກກາງ ແລະ ພາກໄຕ້ ຂອງປະເທດຫວຽດນາມ.

- ຫົວໜ່ວຍທຸລະກິດຕ່າງໆ ມີເປົ້າໝາຍແນໃສ່ເພີ່ມປະສິດທິພາບ ຕ່ອງໂສ້ອຸປະທານ ບໍ່ພຽງແຕ່ແນໃສ່ອະນຸພາກພື້ນແມ່ນ້ຳຂອງເທົ່ານັ້ນ, ແຕ່ວ່າ ຍັງແນໃສ່ໝົດທຸກພາກພື້ນໃນທະວີບອາຊີ ເປັນຕົ້ນແມ່ນ ປະເທດຈີນ, ອິນເດຍ ແລະ ບັນດາປະເທດອາຊຽນອື່ນໆ. ເຖິງແມ່ນວ່າ ການລົງທຶນທາງບອກໃນປະຈຸບັນ ທີ່ຫຼັ່ງໄຫຼເຂົ້າສູ່ອະນຸພາກພື້ນແມ່ນ້ຳຂອງ ຍັງບໍ່ໄດ້ຮັບການຮັບປະກັນວ່າ ຈະມີລັກສະນະຄືເກົ່າ ໃນທິດສະວັດທີ່ຈະມາຮອດນີ້, ແຕ່ວ່າ ມັນຂຶ້ນກັບການປ່ຽນແປງ ປັດໄຈທາງສະພາບແວດລ້ອມ. ອີງຕາມປັດໄຈທີ່ຈະແຈ້ງດັ່ງກ່າວນີ້, ນະໂຍບາຍທີ່ມີຄວາມຍືນຍົງໃນທົ່ວພາກພື້ນ, ການຊຸມໃສ່ຂົງເຂດທີ່ເປັນຈຸດແຂງ ແລະ ການປະກອບສ່ວນແກ້ໄຂຂໍ້ຄົງຄ້າງ ແມ່ນກຸນແຈສຳຄັນທີ່ຈະບັນລຸ ຄວາມເຕີບໂຕທາງດ້ານເສດຖະກິດ ໃນໄລຍະຕໍ່ໜ້າ.

- ອະນຸພາກພື້ນແມ່ນ້ຳຂອງ ເຊື່ອມຈອດກັບຕະຫຼາດເກີດໃໝ່ຂະໜາດໃຫ່ຍຈຳນວນໜຶ່ງ ເປັນຕົ້ນແມ່ນ ປະເທດຈີນ, ອິນເດຍ ແລະ ບັນດາປະເທດອາຊຽນອື່ນໆ, ເຊິ່ງກວມເອົາປະຊາກອນຈຳນວນຫຼາຍກວ່າ **3.3** ຕື້ຄົນ, ເທົ່າກັບເຄິ່ງໜຶ່ງຂອງປະຊາກອນທັງໝົດໃນໂລກ. ໂຄງສ້າງພາກອຸດສະຫະກຳ ທີ່ມີປະສິດທິພາບສູງສຸດ ແລະ ມີຄວາມສອດຄ່ອງກັບຕະຫຼາດເຫຼົ່ານີ້ ທີ່ກຳລັງຂະຫຍາຍຕົວ ສາມາດເປັນແຮງພັກດັນໃຫ້ອະນຸພາກພື້ນແມ່ນ້ຳຂອງ ກາຍເປັນຈຸດເຊື່ອມຕໍ່ ລະຫວ່າງຕະຫຼາດເກີດໃໝ່ຂະໜາດໃຫ່ຍ ໃນທະວີບອາຊີ. ສິ່ງນີ້ຈະເຮັດໃຫ້ອະນຸພາກພື້ນແມ່ນ້ຳຂອງ ກາຍເປັນແຮງຊຸກຍູ້ໃຫ້ມີຄວາມເຕີບໂຕ ທາງດ້ານເສດຖະກິດຂອງທະວີບອາຊີ , ໂດຍຜ່ານການພັກດັນການຂະຫຍາຍຕົວທາງດ້ານການຄ້າ ພາຍໃນທະວີບອາຊີ, ການຫຼຸດຜ່ອນຄວາມແຕກໂຕນທາງດ້ານການພັດທະນາ ແລະ ການພັດທະນາໂຄງສ້າງອຸດສະຫະກຳໃຫ້ທີ່ມີລະດັບສູງຂຶ້ນກວ່າເກົ່າ. ສະນັ້ນ, ວິໄສທັດ ກ່ຽວກັບ ການພັດທະນາໃນໄລຍະຕໍ່ໄປ ຄວນຈະເຫັນວ່າ ອະນຸພາກພື້ນແມ່ນ້ຳຂອງ ແມ່ນ "ຈຸດໃຈກາງຂອງຕ່ອງໂສ້ມູນຄ່າຂອງທະວີບອາຊີ ກໍ່ຄື ຂອງ ໂລກ".

## 2. ສິ່ງທ້າທາຍ ແລະ ກາລະໂອກາດ ສໍາລັບ ອະນຸພາກພື້ນ ແມ່ນໍ້າຂອງ

**<ໂຄງສ້າງທາງການຄ້າ>**

- ປະລິມານການຄ້າ ລະຫວ່າງ ບັນດາປະເທດໃນອະນຸພາກພື້ນແມ່ນໍ້າຂອງ ມີຈໍານວນເພີ່ມຂຶ້ນຢ່າງຕໍ່ເນື່ອງ ຄຽງຄູ່ກັບການຂະຫຍາຍຕົວ ແລະ ການເພີ່ມທະວີຖານການຜະລິດ ແລະ ການເພີ່ມຂຶ້ນຂອງກໍາລັງຊື້. ສັດສ່ວນການຄ້າຂອງອະນຸພາກພື້ນແມ່ນໍ້າຂອງ ທຽບໃສ່ປະລິມານການຄ້າທັງໝົດ ມີຈໍານວນເພີ່ມຂຶ້ນໜຶ່ງເທົ່າໂຕ ຈາກ **3%** ໃນປີ **2012** ມາເປັນ **6%** ໃນປີ **2012.** ເຖິງຢ່າງໃດກໍ່ຕາມ, ການເພິ່ງພາອາໄສເຊິ່ງກັນ ແລະ ກັນ ທາງດ້ານການຄ້າ ພາຍໃນອະນຸພາກພື້ນແມ່ນໍ້າຂອງ ຍັງຄົງຢູ່ໃນລະດັບຕໍ່າ ຖ້າທຽບໃສ່ ການເພິ່ງພາອາໄສເຊິ່ງກັນ ແລະ ກັນ ພາຍໃນອາຊຽນ, ໂດຍສະເພາະແມ່ນ ໃນຂົງເຂດວຽກງານສະບຽງອາຫານ, ອີເລັກໂທຣນິກ ແລະ ລົດຍົນ.

  ເຄືອຂ່າຍການຜະລິດຂ້າມແດນ ພາຍໃນອະນຸພາກພື້ນແມ່ນໍ້າຂອງ ຍັງຄົງມີຄວາມຈໍາກັດ ຍ້ອນວ່າການຜະລິດທີ່ຍັງມີຂະໜາດນ້ອຍ ເປັນອຸປະສັກໃຫ້ການຖ່າຍໂອນ, ເຊິ່ງເປັນຂະບວນການທີ່ອີງໃສ່ແຮງງານເປັນສ່ວນໃຫ່ຍ. ການພັດທະນາອຸດສະຫະກໍາທີ່ມີມູນຄ່າເພີ່ມສູງຂຶ້ນກວ່າເກົ່າ ທີ່ນໍາໃຊ້ທ່າແຮງຈາກຈຸດແຂງ ຂອງແຕ່ລະປະເທດ, ການຈັດສັນແຮງງານຢ່າງເລິກເຊິ່ງ ບົນພື້ນຖານຂະບວນການຜະລິດ ແລະ ການເພິ່ງພາອາໄສເຊິ່ງກັນ ແລະ ກັນ ທາງດ້ານການຄ້າ ຍັງບໍ່ທັນປະກົດຜົນເປັນຈິງເທື່ອ.

- ກ່ຽວກັບ ການຄ້າແບບພິເສດລະດັບພາກພື້ນ, ອະນຸພາກພື້ນແມ່ນໍ້າຂອງ ໄດ້ເພີ່ມລະດັບການສົ່ງອອກ ໄປສູ່ຕະຫຼາດທີ່ຂະຫຍາຍຕົວຢ່າງໄວວາ ເຊັ່ນ ປະເທດຈີນ ແລະ ອິນເດຍ ໃນລະດັບການເຕີມໂຕປະຈໍາປີ ຫຼາຍກວ່າ **20%** ນັບແຕ່ປີ **2000** ເປັນຕົ້ນມາ. ຖ້າສົມທຽບກັບປະເທດອື່ນໆ, ບໍລິມາດການສົ່ງອອກຂອງປະເທດຈີນ ໄປສູ່ປະເທດອິນເດຍ ມີອັດຕາການເຕີບໂຕປະຈໍາປີ ຢູ່ລະດັບເກືອບເທົ່າກັບ **40%,** ແລະ ສັດສ່ວນການນໍາເຂົ້າຈາກປະເທດຈີນ ມີຈໍານວນເພີ່ມຂຶ້ນໜ້ອຍກວ່າ **5%** ຂອງການນໍາເຂົ້າທັງໝົດຂອງປະເທດອິນເດຍ ໃນປີ **2000** ເພີ່ມຂຶ້ນເປັນ **27%** ໃນປີ **2009.** ໜຶ່ງໃນຕົວຂັບເຄື່ອນຕົ້ນຕໍ ຂອງການຂະຫຍາຍການສົ່ງອອກຂອງປະເທດຈີນ ແມ່ນ ປະເທດຈີນ ປະສົບຜົນສໍາເລັດໃນການສະໜອງຄວາມຕ້ອງການຂອງອຸດສະຫະກໍາ ທີ່ກໍາລັງຂະຫຍາຍຕົວ ຂອງປະເທດອິນເດຍ ເຊັ່ນ: ຂະແໜງບໍລິການ ແລະ ອຸດສະຫະກໍາພື້ນຖານໂຄງລ່າງ, ໂດຍຜ່ານການສະໜອງສິນຄ້າສໍາເລັດຮູບ ແລະ ເຄິ່ງສໍາເລັດຮູບ ໃນລາຄາທີ່ມີຄວາມສາມາດໃນການແຂ່ງຂັນທາງດ້ານຕົ້ນທຶນ (ເຊັ່ນ: ສິນຄ້າ **ICT** ເປັນຕົ້ນແມ່ນ ໂທລະສັບສະມາດໂຟນ ແລະ ເຄື່ອງຄອມພິວເຕີ **PC,** ເຄື່ອງອະໄລ່ລົດຍົນ ສໍາລັບ ການບໍລິການສ້ອມແປງ ແລະ ການບໍາລຸງຮັກສາລົດຍົນ, ອຸປະກອນຮັບໃຊ້ໂຮງຈັກໂຮງງານ ແລະ ເຄື່ອງກົນຈັກຮັບໃຊ້ການຜະລິດ). ນອກນັ້ນ, ສິ່ງເຫຼົ່ານີ້ ຍັງເປັນປະໂຫຍດແກ່ອະນຸພາກພື້ນແມ່ນໍ້າຂອງ ເພື່ອຂະຫຍາຍຂະແໜງອຸດສະຫະກໍາ ແລະ ພັດທະນາຕ່ອງໂສ້ມູນຄ່າກັບປະເທດອິນເດຍ ບົນພື້ນຖານຜົນປະໂຫຍດທັງສອງຝ່າຍ ແລະ ການເພິ່ງພາອາໄສເຊິ່ງກັນ ແລະ ກັນ.

- ເພື່ອຄວາມຈະເລີນຮຸ່ງເຮືອງ ບົນພື້ນຖານການສົ່ງອອກ, ສິ່ງທ້າທາຍອັນໜຶ່ງ ຕິດພັນກັບການພັດທະນາພື້ນຖານໂຄງລ່າງການສົ່ງອອກ. ຍ້ອນວ່າ ທ່າເຮືອທະເລນ້ຳເລິກ ສຳລັບກຳປັ່ນ ທີ່ມີທັງໝົດໃນປະຈຸບັນ ໃນອະນຸພາກພື້ນແມ່ນ້ຳຂອງ ປະເຊີນໜ້າກັບບັນດາປະເທດໃນພາກພື້ນມະຫາສະໝຸດປາຊີຟິກ, ຈຸດແຂງທາງການພູມີສາດ ທີ່ໄກ້ຄຽງກັບ ອະນຸພາກພື້ນອິນເດຍ ຍັງບໍ່ທັນໄດ້ຮັບການນຳໃຊ້ຢ່າງເຕັມສ່ວນ. <u>ສະນັ້ນ, ການພັດທະນາທ່າເຮືອທະເລນ້ຳເລິກ ສຳລັບກຳປັ່ນ ຢູ່ປະເທດມຽນມ້າ ຈຶ່ງເປັນຈຸດປະສົງທີ່ມີຄວາມສຳຄັນຫຼາຍ.</u>

<**ການລົງທຶນໂດຍກົງຈາກຕ່າງປະເທດ** (FDI)>

- ການລົງທຶນໂດຍກົງຈາກຕ່າງປະເທດ (**FDI**) ໃນອະນຸພາກພື້ນແມ່ນ້ຳຂອງ ມີການຂະຫຍາຍຕົວຢ່າງໄວວາ ຈາກ **4** ຕື້ໂດລາສະຫະລັດ ໃນຕົ້ນຊຸມປີ **2000** ມາເປັນຈຳນວນຫຼາຍກວ່າ **10** ຕື້ໂດລາສະຫະລັດ ໃນຊຸມປີ **2010.** ໂດຍຜ່ານການຂັບເຄື່ອນ ຈາກການຂະຫຍາຍຕົວທາງດ້ານເສດຖະກິດ ຈາກການຈັດສັນທາງພູມີສາດ ແລະ ໂຄງສ້າງອຸດສະຫະກຳທີ່ໄດ້ຮັບການຍົກລະດັບ, ອະນຸພາກພື້ນນີ້ ໄດ້ກາຍເປັນປາຍທາງຂອງການລົງທຶນ **FDI** ຂອງໂລກ.

- ເຖິງຢ່າງໃດກໍ່ດີ, <u>ບັນຫານີ້ ຕ້ອງໄດ້ຮັບການກວດກາຢ່າງລະອຽດວ່າ ການເພີ່ມຂຶ້ນຂອງ **FDI** ຈະສົ່ງຜົນສະທ້ອນໃຫ້ມີການຍົກລະດັບຂອງຂະແໜງອຸດສະຫະກຳ ໃນອະນຸພາກພື້ນໃນໄລຍະຍາວ ຫຼືບໍ່.</u>

  ໃນປະຈຸບັນ, ການລົງທຶນ **FDI** ໃນອະນຸພາກພື້ນແມ່ນ້ຳຂອງ ສຸມໃສ່ຂະແໜງຊັບພະຍາກອນທຳມະຊາດ (ເຊັ່ນ: ນ້ຳມັນ ແລະ ອາຍແກັດສ໌, ແຮ່ທາດ, ນ້ຳ ແລະ ທີ່ດິນ), ອຸດສະຫະກຳທີ່ນຳໃຊ້ແຮງງານເປັນຕົ້ນຕໍ ນຳໃຊ້ແຮງງານລາຄາຕ່ຳ (ເຊັ່ນ: ການຕັດ, ການປະກອບ ແລະ ການສ່ອຍ (**CMT**) ເຄື່ອງນຸ່ງ ແລະ ເກີບ), ແລະ ສາຍພານການຜະລິດຂະໜາດໃຫຍ່ ຂອງອຸດສະຫະກຳການຜະລິດ. <u>ການລົງທຶນ **FDI** ຈາກປະເທດຍີ່ປຸ່ນ ໄດ້ຮັບການຈັດແບ່ງຕາມປະເພດການລົງທຶນ ທັງບໍລິສັດຂະໜາດໃຫຍ່ ແລະ ຂະໜາດນ້ອຍ, ຈາກເຂດເທິງ ແລະ ເຂດລຸ່ມແມ່ນ້ຳຂອງ ໂດຍສະເພາະແມ່ນ ຕ່ອງໂສ້ມູນຄ່າການຜະລິດອຸດສະຫະກຳ ໃນທົ່ວອະນຸພາກພື້ນແມ່ນ້ຳຂອງ. ສິ່ງນີ້ ເກີດຂຶ້ນຍ້ອນວ່າ ຫົວໜ່ວຍທຸລະກິດຂອງປະເທດຍີ່ປຸ່ນ ເຫັນວ່າ ອະນຸພາກພື້ນແມ່ນ້ຳຂອງ ແມ່ນຖານການຜະລິດໜຶ່ງດຽວ ແລະ ມີຄວາມປາດຖະໜາທີ່ຈະສ້າງກຸ່ມອຸດສະຫະກຳໃນທົ່ວອະນຸພາກພື້ນ ແມ່ນ້ຳຂອງ, ການຂະຫຍາຍຕ່ອງໂສ້ມູນຄ່າ ໃນປະຈຸບັນ ທີ່ມີໃນປະເທດໄທ ແລະ ປະເທດຈີນ, ໃຫ້ສອດຄ່ອງກັບຂະບວນການພັດທະນາ ຂອງບັນດາປະເທດບ້ານໄກ້ເຮືອນຄຽງ. ຍິ່ງໄປກວ່ານັ້ນ, ທ່າມກາງການພັດທະນາອຸດສະຫະກຳການຜະລິດ ແລະ ການເຕີບໂຕຂອງລາຍຮັບລະດັບທ້ອງຖິ່ນ, ການລົງທຶນ ກຳລັງຢູ່ໃນທ່າກ້າວຂະຫຍາຍຕົວ ເພື່ອຄວາມຫຼາກຫຼາຍຂອງອຸດສະຫະກຳ ຈາກຮູບແບບການຂາຍຍົກ ແລະ ຂາຍຍ່ອຍ ມາເປັນການບໍລິການທີ່ຕິດພັນການອຸດສະຫະກຳການຜະລິດ.</u>

- <u>ການກຳນົດເປົ້າໝາຍການພັດທະນາ ໄລຍະກາງ ແລະ ໄລຍະຍາວ ເພື່ອຫັນປ່ຽນໄປສູ່ ໂຄງສ້າງອຸດສະຫະກຳທີ່ມີຄວາມກ້າວໜ້າ, ຂໍ້ມູນຂ່າວສານ ກ່ຽວກັບ ຄວາມຫຼາກຫຼາຍຂອງກຸ່ມອຸດສະຫະກຳ ທີ່ນຳພາໂດຍຫົວ</u>

ໜ່ວຍທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງ ເຊິ່ງສະໜັບສະໜູນອຸດສະຫະກຳທີ່ມີມູນຄ່າເພີ່ມໃນລະດັບສູງ (ເຊັ່ນ: ອຸດສະຫະກຳສະໜັບສະໜູນ ປະກອບມີ ການຜະລິດສິ້ນສ່ວນ/ສິນຄ້າເຄິ່ງສຳເລັດຮູບ, ອຸດສະຫະກຳອອກແບບ, ICT, ການບໍລິການຂາຍຍ່ອຍ ແລະ ອຸດສະຫະກຳການບໍລິການປະເພດອື່ນໆ) ຄວນຈະໄດ້ຮັບການສົ່ງເສີມ. ສະນັ້ນ, ອຸດສະຫະກຳແປຮູບຊັບພະຍາກອນທຳມະຊາດ, ແທນທີ່ຈະສົ່ງອອກວັດຖຸດິບທີ່ບໍ່ຜ່ານການແປຮູບ ພຽງເທົ່ານັ້ນ, ຈະສ້າງມູນຄ່າເພີ່ມທີ່ສູງກວ່າເກົ່າ ໃຫ້ຂະແໜງອຸດສະຫະກຳ.

**<ການຮ່ວມມືກັນຂອງຫົວໜ່ວຍທຸລະກິດລະດັບທ້ອງຖິ່ນ>**

- ຄຽງຄູ່ກັບຄວາມເຕີບໃຫຍ່ຂະຫຍາຍຕົວທາງດ້ານເສດຖະກິດ ຂອງອະນຸພາກພື້ນແມ່ນ້ຳຂອງ, ຫົວໜ່ວຍທຸລະກິດຂັ້ນທ້ອງຖິ່ນ ກໍ່ໄດ້ເຕີບໂຕຂຶ້ນເຊັ່ນກັນ. ໂດຍສະເພາະແມ່ນຢູ່ປະເທດໄທ, ເຊິ່ງກວມເອົາ ຫົວໜ່ວຍທຸລະກິດ ຈຳນວນ 11 ຫົວໜ່ວຍ ທີ່ຈັດຢູ່ໃນລະດັບ 50 ບໍລິສັດທີ່ດີທີ່ສຸດຂອງອາຊຽນ ອີງຕາມມູນຄ່າຕາມລາຄາຕະຫຼາດ, ແລະ ຍັງຈັດຢູ່ໃນລະດັບທີ 3 ຮອງຈາກປະເທດສິງກະໂປ ແລະ ມາເລເຊຍ.

  ຍິ່ງໄປກວ່ານັ້ນ, ໃນກໍລະນີຂອງປະເທດໄທ, ປະເທດໄທ ບໍ່ພຽງແຕ່ຮັບເອົາການລົງທຶນຢູ່ພາຍໃນເທົ່ານັ້ນ ແຕ່ວ່າ ຍັງມີບົດບາດສຳຄັນ ໃນການສະໜອງການລົງທຶນພາຍນອກ ໄປສູ່ບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ. ສະນັ້ນ, ພາຍໃນປີ 2012, ປະເທດໄທ ຈຶ່ງກາຍເປັນ ຜູ້ສະໜອງສຸດທີ່ທາງດ້ານການລົງທຶນໂດຍກົງຈາກຕ່າງປະເທດ (FDI). ການຮ່ວມມືດ້ານທຸລະກິດ ລະຫວ່າງ ປະເທດ ພາຍໃນອະນຸພາກພື້ນແມ່ນ້ຳຂອງ ມີຄວາມກ້າວໜ້າຢ່າງຕໍ່ເນື່ອງ, ເຊິ່ງນຳພາໂດຍຫົວໜ່ວຍທຸລະກິດຂອງປະເທດໄທ; ໜຶ່ງຕົວຢ່າງແມ່ນ ການເຂົ້າຊື້ຫຸ້ນຂອງກຸ່ມບໍລິສັດ Prime ຂອງປະເທດຫວຽດນາມ ທີ່ມີມູນຄ່າ 235 ລ້ານໂດລາສະຫະລັດ ໂດຍກຸ່ມບໍລິສັດຊີມັງສະຫຍາມ ຂອງປະເທດໄທ ໃນປີ 2013. ນອກນັ້ນ, ການຮ່ວມມືທາງດ້ານທຸລະກິດ ລະຫວ່າງ ປະເທດ ໃນຂະແໜງອຸດສະຫະກຳການເງິນ ກໍ່ມີຄວາມພົ້ນເດັ່ນເຊັ່ນກັນ. ໜຶ່ງຕົວຢ່າງແມ່ນ ການເຂົ້າຊື້ຫຸ້ນທະນາຄານອາຍຸດທະຍາ ຂອງທະນາຄານ Mitsubishi UFJ ໃນປີ 2013. ອີກໜຶ່ງຕົວຢ່າງແມ່ນ ການຂະຫຍາຍທຸລະກິດຂອງທະນາຄານການຄ້າ ຂອງປະເທດໄທ ເຂົ້າສູ່ບັນດາປະເທດແມ່ນ້ຳຂອງ ເພື່ອຕອບສະໜອງກັບທ່າອ່ຽງ ນະໂຍບາຍ "ປະເທດໄທ ບວກ ໜຶ່ງ". ການຮ່ວມມືທາງດ້ານທຸລະກິດໃນທົ່ວອະນຸພາກພື້ນແມ່ນ້ຳຂອງ ກຳລັງຢູ່ໃນທ່າກ້າວຂະຫຍາຍຕົວ ຢ່າງໄວວາ.

- ເຖິງຢ່າງໃດກໍ່ຕາມ, ຍັງມີກາລະໂອກາດຈຳນວນໜຶ່ງ ທີ່ຍັງບໍ່ທັນຖືກນຳໃຊ້ ສຳລັບ ເສີມຂະຫຍາຍການຮ່ວມມືທາງດ້ານທຸລະກິດ, ໂດຍສະເພາະແມ່ນ ໃນເວລາສົມທຽບກັບຕົວຢ່າງການຮ່ວມມືທາງທຸລະກິດທີ່ມີຄວາມເຂັ້ມຂຸ້ນໃນພາກພື້ນໃກ້ຄຽງ. ນັກລົງທຶນຕ່າງປະເທດ ມີຄວາມປາດຖະໜາທີ່ຈະຊອກຫາຄູ່ຮ່ວມທຸລະກິດຂັ້ນທ້ອງຖິ່ນ ເພື່ອພັດທະນາທຸລະກິດຂອງຕົນ ແລະ ຊອກຫາແຫຼ່ງຊັບພະຍາກອນພາຍໃນທ້ອງຖິ່ນ. ແຕ່ວ່າ, ພວກເຂົາ ພົບກັບອຸປະສັກຈຳນວນໜຶ່ງ ຍ້ອນວ່າ ຈຳນວນຫົວໜ່ວຍທຸລະກິດຍັງມີບໍ່ພຽງພໍ ແລະ ຫົວໜ່ວຍທຸລະກິດທ້ອງຖິ່ນ ຍັງຂາດຄວາມອາດສາມາດໃນການແຂ່ງຂັນ ໃນອະນຸພາກພື້ນແມ່ນ້ຳຂອງ.

- ວິສະຫະກິດທີ່ມີໃນພາກພື້ນແມ່ນ້ຳຂອງ, ໂດຍສະເພາະແມ່ນ ວິສະຫະກິດຂອງປະເທດໄທ, ແມ່ນມີຈຳນວນສູງສຸດໃນພາກພື້ນອາຊຽນ, ແຕ່ວ່າ ຍັງຄົງມີຄວາມຈຳກັດ ທຽບໃສ່ວິສະຫະກິດຂອງປະເທດຈີນ ແລະ ອິນເດຍ ໃນທະວີບອາຊີ. ຍັງຄົງມີຈຸດທີ່ຄວນປັບປຸງ ເຊິ່ງຕິດພັນລະບຽບຫຼັກການ ຫຼື ນະໂຍບາຍ ກ່ຽວກັບການເພີ່ມທະວີການຮ່ວມມືທາງດ້ານທຸລະກິດ ເປັນຕົ້ນແມ່ນພັນທະມິດທຸລະກິດ ຫຼື **M&A.** ນອກນັ້ນ, ວິສະຫະກິດທີ່ມີໃນພາກພື້ນແມ່ນ້ຳຂອງ ສາມາດຊອກຫາໂອກາດການລົງທຶນ ຢູ່ປະເທດຍີ່ປຸ່ນ ເພື່ອຍົກລະດັບຄວາມອາດສາມາດໃນການແຂ່ງຂັນ ແລະ ການຄຸ້ມຄອງບໍລິສັດຂອງຕົນ ເຊິ່ງສາມາດຮຽນຮູ້ວິທີການຕ່າງໆໄດ້ຈາກວິສະຫະກິດຂອງປະເທດຍີ່ປຸ່ນ.

**<ກິດຈະກຳການຄົ້ນຄວ້າ ແລະ ການພັດທະນາ (R&D)>**

- ໂດຍການດຶງດູດການລົງທຶນຕ່າງປະເທດ ຈາກທຸລະກິດທີ່ມີເຕັກໂນໂລຊີທີ່ທັນສະໄໝ ແລະ ທີ່ສົ່ງເສີມອຸດສະຫະກຳສະໜັບສະໜູນ, ກຸ່ມອຸດສະຫະກຳລະດັບໂລກ ທີ່ມີຄວາມຮູ້ລົງເລິກສະເພາະດ້ານ ເຊັ່ນ ດ້ານລົດຍົນ ແລະ ອີເລັກໂຕຼນິກ ໄດ້ເລີ່ມຕົ້ນກໍ່ຮ່າງສ້າງຕົວຂຶ້ນແລ້ວ ໃນອະນຸພາກພື້ນແມ່ນ້ຳຂອງ.

  ນອກນັ້ນ, ຖານການຜະລິດຢູ່ປະເທດໄທ ໄດ້ຮັບການຍົກລະດັບ ໃນຫຼາຍປີທີ່ຜ່ານມາ. ບໍລິສັດຍັກໃຫ່ຍທາງດ້ານລົດຍົນ ແລະ ເຄື່ອງອາໄລ່ ຂອງປະເທດຍີ່ປຸ່ນ (ຕົວຢ່າງ: ຕົນລົດ ແລະ ໝໍ້ໄຟ) ກໍ່ສະໜັບສະໜູນ ການຍົກລະດັບດັ່ງກ່າວນີ້ ເຊັ່ນກັນ ໂດຍປະກາດເຈດຈຳນົງຂອງຕົນ ທີ່ຈະຂະຫຍາຍຂະແໜງການ **R&D** ໃນອະນຸພາກພື້ນ, ໂດຍສະເພາະແມ່ນຢູ່ປະເທດໄທ.

  ເຖິງຢ່າງໃດກໍ່ຕາມ, ຖ້າສົມທຽບກັບປະເທດຈີນ, ສິງກະໂປ ແລະ ມາເລເຊຍ ໃນດ້ານອັດຕາສ່ວນຂອງປະຊາກອນ, ຈຳນວນນັກຄົ້ນຄວ້າ ແລະ ການນຳໃຊ້ **PCT** (ອະນຸສັນຍາ ວ່າດ້ວຍການຮ່ວມມືດ້ານສິດທິບັດ) ຍັງຢູ່ໃນລະດັບຕໍ່າຫຼາຍ ບໍ່ວ່າຢູ່ໃນປະເທດໄທ ກໍ່ຄື ປະເທດຫວຽດນາມ ເຊິ່ງເປັນປະເທດທີ່ມີທ່າແຮງ ທີ່ຈະກາຍເປັນສູນກາງອຸດສະຫະກຳດ້ານຄວາມຮູ້. ກິດຈະກຳ **R&D** ຄວນຈະໄດ້ຮັບການຄົ້ນຄວ້າ ເພື່ອປັບປຸງພື້ນຖານເຕັກໂນໂລຊີຂອງປະເທດເຫຼົ່ານີ້.

**<SME ທີ່ມີຄວາມອາດສາມາດໃນການແຂ່ງຂັນ>**

- ຍ້ອນວ່າ **SME** ແມ່ນຫົວໜ່ວຍຕົ້ນຕໍຂອງໂຄງສ້າງອຸດສະຫະກຳຂອງຊາດ ເລີ່ມຕົ້ນຈາກກິດຈະກຳຂອງບໍລິສັດ ແລະ ທັດສະນະການຈ້າງງານ, ການສ້າງ ບໍລິສັດ **SME** ໃຫ້ປະກົດຜົນເປັນຈິງ ຄວນຈະຖືກວ່າເປັນປັດໄຈທີ່ຈຳເປັນ ເພື່ອຄວາມເຕີບໂຕຂອງເສດຖະກິດຂອງຊາດ. ເຖິງຢ່າງໃດກໍ່ດີ, ຍ້ອນຄວາມຈຳກັດ ດ້ານການເຂົ້າເຖິງຊັບພະຍາກອນມະນຸດ ແລະ ແຫຼ່ງທຶນ, ບໍລິສັດ **SME** ໃນອະນຸພາກພື້ນແມ່ນ້ຳຂອງ ກຳລັງປະເຊີນໜ້າກັບ ຄວາມຫຍຸ້ງຍາກ ໃນການປັບປຸງ ຜົນຜະລິດຂອງຕົນ ຍ້ອນຂາດນະວະຕະກຳ ແລະ ການເປີດຕະຫຼາດໃໝ່.

- ເພື່ອຍົກລະດັບ ຄວາມອາດສາມາດໃນການແຂ່ງຂັນຂອງບໍລິສັດ **SME**, ຄວນຖືກວ່າ ວຽກງານແກ້ໄຂສິ່ງກີດຂວາງ ໃນການເຂົ້າເຖິງແຫຼ່ງທຶນ ແລະ ຊັບພະຍາກອນມະນຸດ ເປັນບຸລິມະສິດທີ່ໜຶ່ງ, ໂດຍຜ່ານການຍົກລະດັບລະບົບການປະກອບການ, ການມີສ່ວນຮ່ວມຂອງແຮງງານເພດຍິງ ແລະ ໄວໜຸ່ມ, ການເຂົ້າເຖິງແຫຼ່ງທຶນຕາມຮູບແບບປົກກະຕິ ແລະ ບໍ່ປົກກະຕິ. ນອກນັ້ນ, ພາກສ່ວນກ່ຽວຂ້ອງ ຄວນເຫັນເຖິງ ຄວາມຈຳເປັນຂອງການເຂົ້າເຖິງຕະຫຼາດ ແລະ ຜົນຜະລິດທີ່ດີກວ່າເກົ່າ ໂດຍຜ່ານການມີສ່ວນຮ່ວມໃນຕ່ອງໂສ້ອຸບປະທານຂອງໂລກ ແລະ ກຸ່ມອຸດສະຫະກຳ ທີ່ຖືກສ້າງຂຶ້ນໂດຍ **MNC** ແລະ ສິ່ງເສີມນະວະຕະກຳໃໝ່. ເວົ້າສະເພາະ, ຍ້ອນຂໍ້ມູນຂ່າວສານທີ່ບໍ່ສົມດຸ່ນ ແລະ ບັນຫາຄວາມດຸ່ນດ່ຽງຂອງເສດຖະກິດ, ບໍລິສັດ **SME** ຈຶ່ງມີໂອກາດທີ່ຈະປະສົບກັບບັນຫາ ທີ່ຕິດພັນກັບການເຂົ້າເຖິງແຫຼ່ງທຶນ ຫຼາຍກວ່າບໍລິສັດຍັກໃຫ່ຍ. ສະນັ້ນ ການແກ້ໄຂບັນຫາການເຂົ້າເຖິງແຫຼ່ງທຶນ ຈຶ່ງເປັນເລື່ອງ ຮີບດ່ວນ.

- ບົນພື້ນຖານ ຕ່ອງໂສ້ອຸບປະທານຂອງໂລກ ທີ່ສ້າງຂຶ້ນໃນບັນດາປະເທດແມ່ນ້ຳຂອງ, ໂຄງການຂອງລັດຖະບານຈຳນວນໜຶ່ງ, ເປັນຕົ້ນແມ່ນ ນະໂຍບາຍ ແລະ ລະບຽບຫຼັກການ ທີ່ສອດຄ່ອງກັນກັບປະເທດອື່ນໆ ແລະ ການຫຼຸດຜ່ອນຂັ້ນຕອນຕ່າງຂອງພາກລັດ, ແມ່ນມີຄວາມຈຳເປັນ ເພື່ອແກ້ໄຂບັນຫາຂ້າງເທິງນັ້ນ ຢ່າງມີປະສິດທິຜົນ.

**＜ການເຊື່ອມໂຍງລະດັບພາກພື້ນ＞**

- ໃນໄລຍະບໍ່ດົນມານີ້ ການເຊື່ອມໂຍງລະດັບພາກພື້ນໃນຂົງເຂດແມ່ນ້ຳຂອງ ໄດ້ຮັບການປັບປຸງຢ່າງຕໍ່ເນື່ອງ. ຕົວຢ່າງ: ການປັບປຸງຕາມແລວທາງເສດຖະກິດພາກໄຕ້, ເຊັ່ນ: ການເປີດນຳໃຊ້ຂົວຊູບາຊາ, ເຊິ່ງເປັນຂົວທີ່ລັດຖະບານຍີ່ປຸ່ນ ໃຫ້ທຶນຊ່ວຍເຫຼືອລ້າ **ODA**, ເຊິ່ງເປັນເສັ້ນທາງການສົ່ງອອກສິນຄ້າຂອງປະເທດກຳເຈຍໄດ້ຢ່າງທີ່ວ່ອງໄວ, ພ້ອມທັງເຊື່ອມຕໍ່ກັບການຂົນສົ່ງທາງບົກ ລະຫວ່າງປະເທດກຳປູເຈຍ ກັບດ່ານສາກົນໄຕເມບ. ເຖິງຢ່າງໃດກໍ່ຕາມ, ບັນຫາ ສຳລັບ ພື້ນຖານໂຄງລ່າງໜັກ ແລະ ເບົາ ທີ່ຕິດພັນກັບການເຊື່ອມໂຍງລະດັບພາກພື້ນ ຍັງຄົງເປັນສິ່ງກີດຂວາງທີ່ສຳຄັນ ໃນການອຳນວຍຄວາມສະດວກ ໃຫ້ວຽກງານການພັດທະນາຕ່ອງໂສ້ອຸບປະທານໃນທົ່ວພາກພື້ນ. ເວົ້າສະເພາະ, ຫົວໜ່ວຍທຸລະກິດ ເວົ້າວ່າ ການປັບປຸງຖະໜົນຫົນທາງຢູ່ປະເທດມຽນມ້າ ມີພຽງໜ້ອຍດຽວເທົ່ານັ້ນ ເຊັ່ນດຽວກັນກັບປະເທດໃກ້ຄຽງ, ສົມທຽບກັບການພັດທະນາຢ່າງຕໍ່ເນື່ອງ ຢູ່ເຂດອື່ນໆຂອງອະນຸພາກພື້ນແມ່ນ້ຳຂອງ. ໃນຍຸດທະສາດໂຕກຽວ **2015** ສະບັບໃໝ່ ທີ່ໄດ້ປະກາດນຳໃຊ້ໂດຍຜູ້ນຳປະເທດຍີ່ປຸ່ນ ແລະ ຜູ້ນຳບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ ໃນວັນທີ **4** ກໍລະກົດ **2015**, ປະເທດຍີ່ປຸ່ນ ໃຫ້ທຶນຊ່ວຍເຫຼືອ ໃນຮູບແບບຂອງ **ODA** ປະມານ **750** ຕື້ເຢນ ແກ່ພາກພື້ນແມ່ນ້ຳຂອງ ສຳລັບ ໄລຍະສາມປີຕໍ່ໜ້າ **(2016-2018)**, ໂດຍມີຈຸດປະສົງເພື່ອຮັບປະກັນສະຖຽນລະພາບຂອງພາກພື້ນ ແລະ ເພື່ອບັນລຸ "ຄຸນນະພາບຂອງການເຕີບໂຕ" ໃນພາກພື້ນແມ່ນ້ຳຂອງ. ນອກຈາກນີ້, ໃນຍຸດທະສາດໂຕກຽວສະບັບໃໝ່, ບັນດາປະເທດແມ່ນ້ຳຂອງ ສະແດງໃຫ້ເຫັນຄວາມມຸ້ງໝັ້ນ ທີ່ຈະສະໜັບສະໜູນຄວາມຄິດລິເລີ່ມຂອງ ເອດີບີ ກ່ຽວກັບ ການຂະຫຍາຍບໍລິມາດຂອງການປ່ອຍເງິນກູ້, ແລະ ຍິນດີຕ້ອນຮັບ ການພິຈາລະນາຂອງ ເອດີບີ ກ່ຽວກັບ ການເພີ່ມກ້ອນທຶນຂອງຕົນໃນອະນາຄົດ, ເຊັ່ນດຽວກັນກັບ

ການປະກາດຂອງລັດຖະບານຍີ່ປຸ່ນ ກ່ຽວກັບ "ຄວາມຮ່ວມມືເພື່ອພື້ນຖານໂຄງລ່າງທີ່ມີຄຸນນະພາບ" ໂດຍຜ່ານການຮ່ວມມືກັບເອດີບີ ເປັນຕົ້ນແມ່ນ ການພິຈາລະນາເອົາກົນໄກການຮ່ວມມືແບບໃໝ່ ລະຫວ່າງ **JICA** ແລະ ເອດີບີ ເພື່ອອໍານວຍຄວາມສະດວກໃຫ້ການນໍາໃຊ້ຮູບແບບ **PPP** ສໍາລັບ ການລົງທຶນພັດທະນາພື້ນຖານໂຄງລ່າງ. ບົນພື້ນຖານວຽກງານທີ່ກ່າວມານີ້, ຄາດວ່າ ການເຊື່ອມໂຍງລະດັບພາກພື້ນແມ່ນໍ້າຂອງຈະມີຄວາມເຂັ້ມແຂງຫຼາຍຂຶ້ນກວ່າເກົ່າ. ກ່ຽວກັບພື້ນ ຖານໂຄງລ່າງເບົາ, ການພັດທະນາກົດລະບຽບ ທີ່ຕິດພັນກັບການຂົນສົ່ງ ແລະ ການບໍາຄັບໃຊ້ທີ່ສອດຄ່ອງກັນ ຕ້ອງໄດ້ຮັບການກະຕຸກຊຸກຍູ້ ເພື່ອຮັບປະກັນຄວາມໂປ່ງໃສ ແລະ ຄວາມສະດວກ ຂອງລະບົບຂົນສົ່ງພາຍໃນພາກພື້ນ.

- <u>ໂດຍສະເພາະການຂົນສົ່ງສິນຄ້າ, ການພັດທະນາລະບົບໃຫ້ທັນສະໄໝ ໂດຍຜ່ານການບໍລິການທີ່ຫຼາກຫຼາຍ ແລະ ມີຄວາມຊັບຊ້ອນ ແມ່ນປັດໄຈຕົ້ນຕໍ ໃນການຫຼຸດຜ່ອນຕົ້ນທຶນໃນການຂົນສົ່ງ.</u> ຄວາມພະຍາຍາມເຫຼົ່ານີ້ ປະກອບມີ ການແນະນໍາ ແລະ ການດໍາເນີນງານຢ່າງຕໍ່ເນື່ອງ ຂອງລະບົບພັນທະບັດ, ການພັດທະນາສິ່ງອໍານວຍຄວາມສະດວກ ສໍາລັບ ການບໍລິການຮັບ-ສົ່ງສິນຄ້າແບບຮອບດ້ານ ກໍ່ຄື ລະບົບແຊ່ເຢັນ. ນອກນັ້ນ, ການຂົນສົ່ງສິນຄ້າຂ້າມແດນແບບບໍ່ເປັນທາງການ ຄວນຈະໄດ້ຮັບການກໍານົດກົດລະບຽບຄຸ້ມຄອງຢ່າງເໝາະສົມ ເພື່ອພັດທະນາການບໍລິການຂົນສົ່ງຂ້າມແດນແບບທັນສະໄໝ. ໃນເວລາດຽວກັນ, ການບັງຄັບໃຊ້ກົດລະບຽບຈໍລະຈອນໃນປະຈຸບັນ (ເຊັ່ນ: ລະບຽບ ກ່ຽວກັບ ນໍ້າໜັກຂອງການບັນທຸກສິນຄ້າ) ຄວນຈະໄດ້ຮັບການປັບປຸງໃຫ້ເຄັ່ງຄັດຫຼາຍຂຶ້ນ ເພື່ອຮັບປະກັນໄຍລະເວລາຂອງການນໍາໃຊ້ຖະໜົນ ແລະ ຄຸນນະພາບຂອງພື້ນຖານໂຄງລ່າງໜັກໃນດ້ານອື່ນໆ ໃຫ້ສອດຄ່ອງກັບລະດັບການນໍາໃຊ້ໃນອຸດສະຫະກໍາ, ແລະ ໂຄງລ່າງພື້ນຖານໜັກ ຄວນຖືກຮັບຮູ້ ແລະ ບໍາລຸງຮັກສາ ຖືວ່າເປັນ "ສິນຄ້າສ່ວນລວມ" ຂອງບັນດາປະເທດພາກພື້ນແມ່ນໍ້າຂອງ.

- <u>ຂໍ້ຕົກລົງ ກ່ຽວກັບ ການອໍານວຍຄວາມສະດວກໃຫ້ການຂົນສົ່ງຂ້າມແດນ (**CBTA**) ແລະ ບົດບັນທຶກຄວາມເຂົ້າໃຈສອງຝ່າຍ ແລະ ຫຼາຍຝ່າຍສະບັບອື່ນໆທີ່ກ່ຽວຂ້ອງ ຍັງບໍ່ທັນປະກອບສ່ວນໄດ້ດີເທົ່າທີ່ຄວນໃຫ້ການຂົນສົ່ງພາຍໃນພາກພື້ນ.</u> ບັນດາປະເທດແມ່ນໍ້າຂອງ ຈໍາເປັນຕ້ອງຈັດຕັ້ງປະຕິບັດ ຂໍ້ຕົກລົງ **CBTA** ຢ່າງເໝາະສົມ. <u>ການນໍາສະເໜີລະບົບກວດກາປະຕູດຽວ (**SWI**) ກໍ່ຄື ການນໍາສະເໜີລະບົບການຢຸດກວດກາຈຸດດຽວ (**SSI**) ຢູ່ເຂດຄວບຄຸມລວມ (**CCA**) ຢູ່ດ່ານຂະໜາດໃຫ່ຍ ຄວນຈະໄດ້ຮັບການພິຈາລະນາ.</u> ນອກນັ້ນ, ການດໍາເນີນງານທີ່ເໝາະສົມ ອີງຕາມເງື່ອນໄຂຂອງຂໍ້ຕົກລົງເຫຼົ່ານີ້, ເຊັ່ນດຽວກັນກັບການເຜີຍແຜ່ຂໍ້ມູນຂ່າວສານ ໃຫ້ສາທາລະນະຊົນ ຮັບຮູ້ ກ່ຽວກັບກົດລະບຽບໃໝ່ ແລະ ການດໍາເນີນງານທີ່ສອດຄ່ອງກັບຂໍ້ຕົກລົງຄວນຈະໄດ້ຮັບການຮັບປະກັນ. ນອກຈາກນີ້, ຍັງມີບົດບັນທຶກຄວາມເຂົ້າໃຈອີກຈໍານວນໜຶ່ງ, ການເພີ່ມທະວີຈໍານວນໃບອະນຸຍາດການຂົນສົ່ງຂ້າມແດນ ຄວນຈະໄດ້ຮັບການພິຈາລະນາແບບບໍ່ຕາຍຕົວ ເພື່ອໃຫ້ສອດຄ່ອງກັບແຕ່ລະປະເພດທຸລະກິດ ທີ່ຕ້ອງການການບໍລິການຮັບ-ສົ່ງສິນຄ້າ.

<ພະລັງງານ ແລະ ສິ່ງແວດລ້ອມ>

- ສິ່ງທ້າທາຍອີກສິ່ງໜຶ່ງ ນອນຢູ່ໃນບັນຫາການຂາດສະຖຽນລະພາບຂອງຂະແໜງພະລັງງານໄຟຟ້າ ໃນອະນຸພາກພື້ນແມ່ນ້ຳຂອງ. ຍັງບໍ່ທັນມີການລົງທຶນຢ່າງຫຼວງຫຼາຍ ແນໃສ່ປັບປຸງສະຖຽນລະພາບ ແລະ ປະສິດທິພາບຂອງພະລັງງານໃນລະດັບພາກພື້ນ ໂດຍຜ່ານການພັດທະນາຕາຄ່າຍໄຟຟ້າພາຍໃນພາກພື້ນ. ການປະສົມປະສານພະລັງງານທີ່ມີປະສິດທິພາບສູງສຸດ ຄວນຈະໄດ້ຮັບການພັດທະນາຂຶ້ນ ບົນພື້ນຖານຄື ປະລິມານພະລັງງານທີ່ມີໃນປະຈຸບັນ ແມ່ນຂຶ້ນກັບພະລັງງານທີ່ຜະລິດຈາກລະບົບໄຟຟ້າພະລັງນ້ຳ ເປັນສ່ວນໃຫ່ຍ ແລະ ຮຽກຮ້ອງເຖິງແຫຼ່ງພະລັງງານອື່ນໆ ໃນລະດູແລ້ງ. ພາຍໃນ 5 ປະເທດຂອງອະນຸພາກພື້ນ, ມີພຽງປະເທດໄທເທົ່ານັ້ນ ທີ່ມີຊື່ສຽງທີ່ດີກວ່າ ປະເທດຈີນ ໃນດ້ານການຮັກສາສະຖຽນລະພາບພະລັງງານໄຟຟ້າ ເພື່ອຖານການຜະລິດ. ລາຄາຕໍ່ຫົວໜ່ວຍຂອງໄຟຟ້າ ຢູ່ປະເທດກຳປູເຈຍ ຢູ່ໃນລະດັບທີ່ສູງກວ່າປະເທດຈີນ ໃນຂະນະທີ່ ລາຄາໄຟ້ຟ້າ ຢູ່ປະເທດຫວຽດນາມ ແລະ ປະເທດມຽນມ້າ ກໍ່ເລີ່ມຕົ້ນປັບຕົວສູງ.

- ບໍລິສັດຂອງປະເທດຍີ່ປຸ່ນ ກໍ່ມີລົງທຶນໃສ່ໂຄງການຜະລິດໄຟຟ້າ ຢູ່ປະເທດກຳປູເຈຍ, ສປປ ລາວ, ມຽນມ້າ, ໄທ ແລະ ຫວຽດນາມ. ໃນປະເທດທີ່ຂະແໜງພະລັງງານ ມີການເປີດກວ້າງ, ຜູ້ສະໜອງພະລັງງານເອກະລາດ (IPP) ສ່ວນຫຼາຍແລ້ວ ແນໃສ່ສ້າງໂຮງງານຜະລິດພະລັງງານຂະໜາດນ້ອຍ ແລະ ບໍ່ພຽງພໍ.

- ຍ້ອນການບໍລິໂພກໄຟຟ້າມີທ່າອ່ຽງສູງຂຶ້ນ ຄຽງຄູ່ກັບການເຕີບໂຕຂອງເສດຖະກິດ ໃນອະນຸພາກພື້ນແມ່ນ້ຳຂອງ, ສະນັ້ນ ຈິ່ງມີຈຳເປັນຢ່າງຮີບດ່ວນ ສຳລັບ ພື້ນຖານໂຄງລ່າງທີ່ຕິດພັນກັບຂະແໜງພະລັງງານ ແລະ ການແລກປ່ຽນພະລັງງານ ພາຍໃນພາກພື້ນ. ນອກນັ້ນ, ການພັດທະນາພະລັງງານນ້ຳມັນ ແລະ ອາຍແກດສ໌ ຄວນຈະໄດ້ຮັບການສົ່ງເສີມຫຼາຍຂຶ້ນກວ່າເກົ່າ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການພະລັງງານ ທີ່ເພີ່ມຂຶ້ນ ບົນພື້ນຖານຄວາມເອົາໃຈໃສ່ຢ່າງເໝາະສົມ ຕໍ່ຜົນກະທົບຂອງການປ່ຽນແປງດິນຟ້າອາກາດ.

- ນອກນັ້ນ, ປະສິດທິພາບ ແລະ ການອະນຸລັກພະລັງງານ (EE&C) ກໍ່ຄວນຈະໄດ້ຮັບການສົ່ງເສີມເຊັ່ນກັນ ເພື່ອຫຼີກລ້ຽງການເພີ່ມຂຶ້ນຢ່າງໄວວາ ຂອງຕ້ອງການພະລັງງານ. ການພັດທະນານະໂຍບາຍ EE&C ແລະ ກອບນິຕິກຳ ແມ່ນມີຄວາມສ◌ໍາຄັນ ສຳລັບ ປະເທດກຳປູເຈຍ, ສປປ ລາວ ແລະ ມຽນມ້າ.

- ຄຽງຄູ່ກັບການເຕີບໃຫຍ່ຂະຫຍາຍຕົວທາງເສດຖະກິດ ແລະ ຄວາມຕ້ອງການພະລັງງານໄຟຟ້າ ທີ່ເພີ່ມຂຶ້ນໃນອະນຸພາກພື້ນແມ່ນ້ຳຂອງ, ສິ່ງທ້າທາຍທາງດ້ານສິ່ງແວດລ້ອມຈຳນວນໜຶ່ງ ໄດ້ຮັບການຍົກຂຶ້ນ ເປັນຕົ້ນແມ່ນ ມົນລະພິດທາງນ້ຳ/ອາກາດ, ການຕັດໄມ້ທຳລາຍປ່າ, ດິນເຊາະເຈື່ອນ, ການຂາດແຄນນ້ຳ ແລະ ບັນຫາຂີ້ເຫຍື້ອທີ່ເປັນອັນຕະລາຍ.

- ລັດຖະບານປະເທດຍີ່ປຸ່ນ ກໍ່ພົບບັນຫາໃນລັກສະນະນີ້ ເຊັ່ນກັນ ໃນໄລຍະການເຕີບໂຕສູງຂອງເສດຖະກິດຂອງປະເທດ ແລະ ໄລຍະການພັດທະນາມາດຕະການແກ້ໄຂທີ່ຫຼາກຫຼາຍ ແຕ່ລະບຽບກົດໝາຍ ຈົນເຖິງເຕັກໂນໂລຊີ. ການຮ່ວມມື ລະຫວ່າງ ບັນດາປະເທດອະນຸພາກພື້ນແມ່ນ້ຳຂອງ ແລະ ປະເທດຍີ່ປຸ່ນ ໃນຂົງ

ເຂດວຽກງານນີ້ ຈະໄດ້ຮັບການສ້າງຕັ້ງຂຶ້ນ ໂດຍການສະໜອງຄວາມຮູ້ ແລະ ເຕັກໂນໂລຊີ ທີ່ລັດຖະບານຍີ່ປຸ່ນ ໄດ້ສະສົມມາ.

**<ການພັດທະນາຊັບພະຍາກອນມະນຸດ (HRD)>**

- ເຖິງແມ່ນວ່າ ລະດັບຄ່າແຮງງານຂອງກຳລັງແຮງງານ ແລະ ຜູ້ບໍລິຫານ ໃນປະເທດກຳປູເຈຍ, ສປປ ລາວ, ມຽນມ້າ ແລະ ຫວຽດນາມ ມີຈຳນວນເພີ່ມຂຶ້ນ, ຕົ້ນທຶນດ້ານຄ່າແຮງງານ ຍັງຄົງມີຄວາມອາດສາມາດໃນການແຂ່ງຂັນ ຖ້າທຽບໃສ່ປະເທດຈີນ, ອິນເດຍ ແລະ ປະເທດອາຊຽນອື່ນໆ.

- ເຖິງຢ່າງໃດກໍ່ຕາມ, ຂໍ້ຄວນລະວັງທາງດ້ານທຸລະກິດ ທີ່ມີຄ່າແຮງງານສູງຂຶ້ນ ໂດຍປາດສະຈາກການປັບປຸງຜົນຜະລິດ, ມີການລາອອກຂອງພະນັກງານ, ແລະ ມີຂໍ້ຂັດແຍ່ງແຮງງານຢ່າງເປັນປົກກະຕິ ອາດຈະຫຼຸດຜ່ອນທ່າແຮງໃນການດຶງດູດຂອງອະນຸພາກພື້ນແມ່ນ້ຳຂອງ ໃຫ້ເປັນຖານການຜະລິດ. ນອກນັ້ນ, ສິ່ງສຳຄັນອີກສິ່ງໜຶ່ງແມ່ນ ທ່າອ່ຽງ "ປະເທດໄທ ບວກ ໜຶ່ງ" ແລະ ການຂະຫຍາຍທຸລະກິດຂ້າມແດນ ຍັງບໍ່ທັນຟົດຟື້ນເທົ່າທີ່ຄວນ ຍ້ອນບັນຫາການຂາດກຳລັງແຮງງານ ຢ່າງຮຸນແຮງ ຢູ່ຕາມເຂດຊາຍແດນ. ຍິ່ງໄປກວ່ານັ້ນ, ຫົວໜ່ວຍທຸລະກິດ ຍັງເວົ້າວ່າ ການຝຶກອົບຮົມວິຊາຊີບ ແລະ ອະຊີວະສຶກສາ ທີ່ມີບໍ່ພຽງພໍນັ້ນ ໝາຍເຖິງ ການຂາດແຄນແຮງງານທີ່ມີສີມື, ສິ່ງຜົນສະທ້ອນເຮັດໃຫ້ການປັບປຸງຄຸນນະພາບ ແລະ ຜົນຜະລິດ ຍັງມີຄວາມຈຳກັດໃນອະນຸພາກພື້ນນີ້. ສິ່ງທ້າທາຍເຫຼົ່ານີ້ ແມ່ນສິ່ງທ້າທາຍຕົ້ນຕໍ ຕໍ່ການຍົກລະດັບອຸດສະຫະກຳ ສຳລັບ ການພັດທະນາອະນຸພາກພື້ນ ໃນໄລຍະກາງ ແລະ ໄລຍະຍາວ.

  ດັ່ງທີ່ໄດ້ລະບຸໄວ້ໃນແຜນງານ **AEC**, ການເຄື່ອນຍ້າຍແຮງງານທີ່ມີສີມື ແມ່ນມີຄວາມຈຳເປັນ ເພື່ອການນຳໃຊ້ສີມືແຮງງານທີ່ມີຈຳນວນຈຳກັດໃນອະນຸພາກພື້ນແມ່ນ້ຳຂອງ ຢ່າງມີປະສິດທິພາບ. ສຳລັບ ແຮງງານທີ່ບໍ່ມີສີມື, ໃນຂະນະທີ່ ການເຄື່ອນຍ້າຍແຮງງານ ພາຍໃນອະນຸພາກພື້ນ ທີ່ມີຄວາມສະດວກສະບາຍນັ້ນ ເປັນສິ່ງດຶງດູດ ສຳລັບ ຫົວໜ່ວຍທຸລະກິດ, ຄວາມກັງວົນໜຶ່ງແມ່ນ ຄວາມແຕກໂຕນກັນຂອງຄ່າຈ້າງແຮງງານ ຍ້ອນວ່າລະດັບການພັດທະນາອຸດສະຫະກຳແຫ່ງຊາດໃນອະນຸພາກພື້ນ ທີ່ມີຫຼາຍລະດັບ ອາດຈະນຳໄປສູ່ການຍົກຍ້າຍຖິ່ນຖານຂອງກຳລັງແຮງງານຢ່າງຫຼວງຫຼາຍ. ສິ່ງນີ້ ອາດຈະສົ່ງຜົນສະທ້ອນໃຫ້ເຮັດໃຫ້ມີການຍົກຍ້າຍອຸດສະຫະກຳຢ່າງຖາວອນ ພາຍໃນອະນຸພາກພື້ນ.

## 3. ໂຄງສ້າງອຸດສະຫະກຳໃນທົ່ວອະນຸພາກພື້ນແມ່ນ້ຳຂອງ ໃນອະນາຄົດ

○ ປະເທດໄທ, ເຊິ່ງເປັນເສດຖະກິດແຖວໜ້າໃນອະນຸພາກພື້ນແມ່ນ້ຳຂອງ, ຄວນຈະນຳພາຂະບວນການຫັນປ່ຽນໂຄງການອຸດສະຫະກຳ ແລະ ສົ່ງເສີມການໂອນມອບເຕັກໂນໂລຊີ ສູ່ປະເທດອື່ນໆ ໃນອະນຸພາກພື້ນແມ່ນ້ຳຂອງ. ໂດຍຜ່ານການຍົກລະດັບກຸ່ມອຸດສະຫະກຳລົດຍົນ ແລະ ອີເລັກໂຕຼນິກ ທີ່ມີໃນປະຈຸບັນ, ແລະ ໂດຍຜ່ານການນຳໃຊ້ທ່າແຮງຂອງຕົນ ໃນນາມທີ່ເປັນນັກລົງທຶນແຖວໜ້າ ທີ່ມີກ້ອນທຶນສະສົມຈຳນວນຫຼາຍທີ່ສຸດ, ປະເທດໄທສາມາດຍົກລະດັບເຕັກໂນໂລຊີ ແລະ ອຸດສະຫະກຳພາຍໃນປະເທດ, ຄຽງຄູ່ກັບການຂະ

ຫຍາຍຕ່ອງໂສ້ອຸບປະທານຂອງຕົນ ໄປທົ່ວອະນຸພາກພື້ນ. ຕົວຢ່າງ: ນອກຈາກການປະກອບສິ້ນສ່ວນຂັ້ນສຸດ ແລະ ການຜະລິດອະໄລ່, ຂະບວນການສ້າງມູນຄ່າເສີມທີ່ສູງຂຶ້ນກວ່າເກົ່າ ແລະ ຖານ **R&D** ສາມາດຖືກພັດທະນາຂຶ້ນຢູ່ປະເທດໄທ (ເຊັ່ນ: ການພັດທະນາ ແລະ ການເພີ່ມທະວີການຜະລິດຊອບແວ **ECU** ໃນອຸດສະຫະກຳລົດຍົນ, ການຍົກລະດັບປະລິມານສິ້ນສ່ວນທົ່ວໄປ ແລະ ການຂັດສານເຄມີ ໃນອຸດສະຫະກຳອີເລັກໂຕຼນິກ.

- ເຖິງແມ່ນວ່າ ປະເທດຫວຽດນາມ ເປັນປະເທດທີ່ມີລາຍຮັບລະດັບກາງ, ຖານອຸດສະຫະກຳສະໜັບສະໜູນທີ່ເຂັ້ມແຂງ ຍັງບໍ່ທັນໄດ້ຮັບການສ້າງຕັ້ງຂຶ້ນໃນປະເທດ, ແຕ່ວ່າ ປະເທດຫວຽດນາມຄວນຈະຍົກລະດັບທ່າແຮງຂອງຕົນ ໃຫ້ສູງຂຶ້ນກວ່າເກົ່າ ຍ້ອນວ່າ ເປັນປະເທດທີ່ມີຊື່ສຽງ ໃນອະນຸພາກພື້ນ ໂດຍມີທ່າເຮືອທະເລນ້ຳເລິກ ແລະ ຊາຍແດນຕິດຈອດກັບທະເລ ທີ່ມີໄລຍະຍາວ ເຊິ່ງເປັນຊ່ອງທາງການເຂົ້າເຖິງທີ່ດີ ສຳລັບ ຕະຫຼາດ **US** ແລະ **EU**, ແລະ ຍັງມີທີ່ຕັ້ງທາງພູມີສາດ ໄກ້ກັບພາກໄຕ້ຂອງປະເທດຈີນ ເຊິ່ງເປັນປະເທດທີ່ກວມເອົາອຸດສະຫະກຳການຜະລິດເຄື່ອງອີເລັກໂຕຼນິກ ທີ່ໃຫ່ຍກວ່າໝູ່ໃນໂລກ. ນະໂຍບາຍດ້ານອຸດສະຫະກຳທີ່ສອດຄ່ອງກັນ ເລີ່ມຈາກການກະຕຸ້ນຄວາມຕ້ອງການ, **HRD**, ການເປີດເສລີດ້ານການຄ້າ ແລະ ນະໂຍບາຍການສົ່ງເສີມການລົງທຶນ ອາດຈະດຶດດູງເອົາ ການລົງທຶນ **FDI** ຈາກປະເທດຍີ່ປຸ່ນ, ຈີນ ແລະ ເກົາຫຼີ ເຂົ້າສູ່ອຸດສະຫະກຳຂອງພາກພື້ນ ເປັນຕົ້ນແມ່ນ ອຸດສະຫະກຳລົດຍົນ ແລະ ອີເລັກໂທຣນິກ. ປະເທດຫວຽດນາມ ໄດ້ດຶງດູດເອົາການລົງທຶນ **FDI** ຈາກປະເທດຍີ່ປຸ່ນ ແລະ ຈີນ ເຂົ້າເຮັດການຜະລິດອຸດສະຫະກຳຕົ້ນຕໍ ເຊັ່ນ: ການຜະລິດເສັ້ນຝ້າຍ ຫຼື ຂະບວນການທີ່ແມ້ນຍຳ ໃນການຜະລິດ. ປະເທດຫວຽດນາມ ສາມາດສົ່ງເສີມອຸດສະຫະກຳຕົ້ນຕໍດັ່ງກ່າວນັ້ນ ໂດຍການແນະນຳນະໂຍບາຍ ກ່ຽວກັບ ການນຳໃຊ້ຄວາມພະຍາຍາມ **EPA** ທີ່ມີຄວາມກ້າວໜ້າ ເຊັ່ນ: **TPP, RCEP** ແລະ ຮ່ວມກັບ **EU.**

- ປະເທດລາວ, ກຳປູເຈຍ ແລະ ປະເທດມຽນມ້າ ຍັງຢູ່ໃນໄລຍະຕົ້ນຂອງຂະບວນການຫັນປ່ຽນເປັນປະເທດອຸດສະຫະກຳ ແລະ ສະນັ້ນ ບຸລິມະສິດຕົ້ນຕໍ ແມ່ນການພັດທະນາອຸດສະຫະກຳ ທີ່ຊຸກຍູ້ຊັບພະຍາກອນທຳມະຊາດ ແລະ/ຫຼື ກຳລັງແຮງງານທີ່ມີຢູ່ຢ່າງຫຼວງຫຼາຍ ເຊັ່ນ: ການກະສິກຳ ແລະ ການປະມົງ, ການແປຮູບສະບຽງອາຫານ ແລະ ທ່ອງທ່ຽວ. ໃນໄລຍະສັ້ນ, ບຸລິມະສິດອີກຈຸດໜຶ່ງແມ່ນ ການເຂົ້າຮ່ວມເຄືອຄ່າຍການຜະລິດລະດັບໂລກ ໂດຍການເຊື້ອເຊີນກຸ່ມການຜະລິດຈາກປະເທດອື່ນໆ ເປັນຕົ້ນແມ່ນຂະບວນການຜະລິດອີງໃສ່ແຮງງານເປັນຕົ້ນຕໍ ແລະ ການຫຼຸດຜ່ອນຕົ້ນທຶນການບໍລິການ. ສິ່ງນີ້ ສາມາດຍົກລະດັບຄວາມອາດສາມາດໃນການແຂ່ງຂັນຂອງບໍລິສັດທ້ອງຖິ່ນ ແລະ ບັງຄັບໃຊ້ລະດັບແຮງງານ ໂດຍຍົກລະດັບເຕັກໂນໂລຊີ ທີ່ຮົ່ວໄຫຼມາກຈາກເຄື່ອຄ່າຍການຜະລິດລະດັບໂລກ.

ເຖິງຢ່າງໃດກໍ່ຕາມ, ທີ່ຕັ້ງຂອງການຜະລິດທີ່ອີງໃສ່ແຮງງານເປັນຕົ້ນຕໍ ມີຄວາມສາມາດປ່ຽນແປງໄດ້; ສະນັ້ນ ໃນໄລຍະຍາວ ການພັດທະນາອຸດສະຫະກໍາ ທີ່ສອດຄ່ອງກັບປະເທດ/ພາກພື້ນໃກ້ຄຽງ ແລະ ທີ່ນໍາໃຊ້ທ່າແຮງ ຂອງຈຸດແຂງ ທີ່ມີໃນແຕ່ລະປະເທດ ແມ່ນມີຄວາມສໍາຄັນຫຼາຍ.

ຕົວຢ່າງ ສະມັດຕະພາບຂອງ CMT ໃນປະຈຸບັນ, ປະເທດກໍາປູເຈຍ ແລະ ມຽນມ້າ ສາມາດດຶງດູດອຸດສະຫະກໍາທີ່ມີມູນຄ່າເພີ່ມສູງກວ່າເກົ່າ ເຊັ່ນ ການຜະລິດເສັ້ນຝ້າຍ ແລະ ຕໍາແຜ່ນ ຫຼື ການວາງແຜນຜະລິດຕະພັນ. ນອກນັ້ນ, ສໍາລັບ ການເຕີບໂຕໄລຍະຍາວ ໃນຂະແໜງອຸດສະຫະກໍາທີ່ມີມູນຄ່າເພີ່ມ ລະດັບສູງ ແລະ ລະດັບກາງ, ການພັດທະນາການບໍລິການຂົນສົ່ງ ໃຫ້ກາຍເປັນຈຸດໃຈກາງຂອງອຸດສະຫະກໍາທັງໝົດ, ເປັນຕົ້ນແມ່ນ ອຸດສະຫະກໍາການຂົນສົ່ງ ລວມທັງການຫຸ້ມຫໍ່ ແລະ ການກວດກາ, ການຂະຫຍາຍການບໍລິການບໍາລຸງຮັກສາ ແລະ ອຸດສະຫະກໍາກາຜະລິດອີງປະກອບ, ແລະ ການພັດທະນາພື້ນຖານໂຄງລ່າງ, ແມ່ນມີຄວາມຈໍາເປັນ.

ໂດຍມີຊັບພະຍາກອນນໍ້າຢ່າງຫຼວງຫຼາຍ, ດິນທີ່ອຸດົມສົມບູນ ແລະ ແຮງງານທີ່ມີລາຄາຕໍ່າ, ປະເທດລາວ ມີຄວາມໄດ້ປຽບ ໃນການສ້າງອຸດສະຫະກໍາທີ່ມີຄວາມແໝັ້ນຢໍ້າ (ເຊັ່ນ: ການຜະລິດເລນ (lens)), ການຜະລິດແຮ່ທາດ, ການຜະລິດກະສິກໍາ, ການຜະລິດໄຟຟ້າ ແລະ ການປະກອບເຄື່ອງອີເລັກໂທຣນິກ. ຊັບພະຍາກອນທໍາມະຊາດທີ່ມີຈໍານວນຫຼວງຫຼາຍ ບໍ່ພຽງແຕ່ເປັນທ່າແຮງ ໃນການສົ່ງອອກວັດຖຸດິບ, ແຕ່ວ່າ ຍັງມີໂອກາດຍົກລະດັບອຸດສະຫະກໍາ ໂດຍການແປຮູບຊັບພະຍາກອນເຫຼົ່ານັ້ນ ແລະ ສ້າງມູນຄ່າເພີ່ມ.

ນອກນັ້ນ, ປະສິດທິພາບໃນການຜະລິດ ແລະ ການນໍາສົ່ງກະແສໄຟຟ້າ ທີ່ສູງຂຶ້ນກວ່າເກົ່າ ສາມາດສ້າງຄວາມເຂັ້ມແຂງ ໃຫ້ອຸດສະຫະກໍາການຜະລິດ ໃນອະນພາກພື້ນແມ່ນໍ້າຂອງ.

○ ຄຽງຄູ່ກັບການຫັນປ່ຽນອຸດສະຫະກໍາ ແລະ ການປ່ຽນແປງໂຄງສ້າງອຸດສະຫະກໍາ ຂ້າງເທິງນັ້ນ, ພວກເຮົາສາມາດຄາດເດົາໄດ້ວ່າ ສິ່ງທ້າທາຍຈໍານວນໜຶ່ງຈະເກີດຂຶ້ນ ຈາກຄວາມແຕກໂຕນຂອງການພັດທະນາ ລະຫວ່າງເຂດຕົວເມືອງ ແລະ ເຂດຊົນນະບົດ ເຊັ່ນ: ການຫຼຸດລົງຂອງປະຊາກອນຢູ່ເຂດຊົນນະບົດ ແລະ ຄວາມແຕກໂຕນດ້ານລາຍຮັບຈະມີຈໍານວນເພີ່ມຂຶ້ນ. ເພື່ອແກ້ໄຂສິ່ງທ້າທາຍເຫຼົ່ານີ້, ສິ່ງສໍາຄັນແມ່ນຕ້ອງ ສຸມໃສ່ການຜະລິດກະສິກໍາ ແລະ ສະບຽງອາຫານ, ເຊິ່ງເປັນອຸດສະຫະກໍາຕົ້ນຕໍຂອງເຂດຊົນນະບົດ, ໃຫ້ເປັນອຸດສະຫະກໍາຍຸດທະສາດ ທີ່ສ້າງຕ່ອງໂສ້ມູນຄ່າສະບຽງອາຫານ, ແລະ ສົ່ງເສີມໃຫ້ມີການຍົກລະດັບມູນຄ່າເພີ່ມໃຫ້ສູງກວ່າເກົ່າ. ໂດຍພິຈາລະນາປະເດັນການເພີ່ມຂຶ້ນຂອງຄວາມຕ້ອງການສະບຽງອາຫານ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ຄວາມໄດ້ປຽບຂອງທີ່ຕັ້ງພູມີສາດ ຂອງອະນຸພາກພື້ນແມ່ນໍ້າຂອງ, ການສົ່ງເສີມການປູກຝັງ ແລະ ການແປຮູບໝາກໄມ້/ຜັກ ໃຫ້ກາຍເປັນສິນຄ້າຍຸດທະສາດໃນການສົ່ງອອກ ໂດຍເອົາໃຈໃສ່ພິເສດ ດ້ານຄວາມປອດໄພຂອງສະບຽງອາຫານ ອາດຈະມີທ່າແຮງທີ່ດີ. ການພັດທະນາການຜະລິດກະສິກໍາ ແລະ ການແປຮູບສະບຽງອາຫານ ຈະປັບປຸງອຸດສະຫະກໍາການຜະລິດອື່ນໆ (ການຜະລິດເຄື່ອງກົນຈັກກະສິກໍາ, ກົນຈັກແປຮູບສະບຽງອາຫານ) ແລະ ການບໍລິການປະເພດອື່ນໆ (ການບໍລິການສົ່ງສິນຄ້າແຊ່ເຢັນ,

ຮ້ານຂາຍຍ່ອຍອາຫານ ແລະ ການບໍລິການອາຫານ) ທີ່ມີຕ່ອງໂສ້ມູນຄ່າ. ນອກນັ້ນ, ການເຊື່ອມໂຍງອຸດສະຫະກຳສະບຽງອາຫານ ແລະ ການຜະລິດກະສິກຳ ຈະຊ່ວຍຂະແໜງກະສິກຳ ໃຫ້ກາຍເປັນ, ດັ່ງທີ່ຄົນມັກເອີ້ນວ່າ, "ອຸດສະຫະກຳທີ່ຫົກ (ການປະສົມປະສານກັນ ຂອງອຸດສະຫະກຳຂັ້ນຕົ້ນ, ອຸດສະຫະກຳຊັ້ນກາງ ແລະ ອຸດສະຫະກຳຊັ້ນສູງ)" ແລະ ເພີ່ມມູນຄ່າໃຫ້ ອຸດສະຫະກຳການຜະລິດກະສິກຳ. ສິ່ງນີ້ສາມາດນຳພາໄປສູ່ການສ້າງຕັ້ງ ຕ່ອງໂສ້ມູນຄ່າສະບຽງອາຫານ ໃນອະນຸພາກພື້ນແມ່ນ້ຳຂອງ ແລະ ເພື່ອເຊື່ອມໂຍງກັບຕ່ອງໂສ້ມູນຄ່າສະບຽງອາຫານ ໃນລະດັບໂລກ.

ຕົວຢ່າງ: ການພັດທະນາຂະແໜງກະສິກຳໃຫ້ມີຄວາມກ້າວໜ້າ ໃນອະນຸພາກພື້ນແມ່ນ້ຳຂອງ ຈະເປັນການກະຕຸ້ນໃຫ້ມີການຜະລິດກົນຈັກໃນລະດັບທ້ອງຖິ່ນ, ເຊິ່ງຈະປະກອບສ່ວນສົມທົບເຂົ້າໃນ ວຽກງານແກ້ໄຂການຂາດແຄນແຮງງານກະສິກຳ ໂດຍຜ່ານການຍົກລະດັບຜົນລະລິດ, ແລະ ຍັງສະໜັບສະໜູນການຫັນປ່ຽນ ແຮງງານ ຈາກອຸດສະຫະກຳຂັ້ນຕົ້ນ ມາເປັນຊັ້ນກາງ ແລະ ຊັ້ນສູງ. ນອກນັ້ນ, ການພັດທະນາອຸດສະຫະກຳການບໍລິການຂົນສົ່ງ ທີ່ສະໜອງການຂົນສົ່ງແບບແຊ່ເຢັນ ຈະຊ່ວຍປັບປຸງ ຄວາມອາດສາມາດໃນການແຂ່ງຂັນ ດ້ານການສົ່ງອອກຜະລິດຕະພັນກະສິກຳ ເຊັ່ນດຽວກັນກັບ ລະບົບການແຈກຢາຍຜະລິດຕະພັນກະສິກຳ ແບບພື້ນຖານ. ຍິ່ງໄປກວ່ານັ້ນ, ຊາວກະສິກອນ ແລະ ບໍລິສັດ **SME** ສາມາດໄດ້ຮັບຜົນປະໂຫຍດທາງດ້ານເສດຖະກິດ ເຊັ່ນ: ລາຍຮັບທີ່ເພີ່ມຂຶ້ນຂອງຊາວກະສິກອນ ແລະ ການພັດທະນາເສດຖະກິດຊົນນະບົດ, ໂດຍຜ່ານການເຂົ້າຕະຫຼາດໂດຍກົງ ເຊິ່ງເປັນຜົນມາຈາກການສ້າງໃຫ້ "ອຸດສະຫະກຳທີຫົກ" ປະກົດຜົນເປັນຈິງ.

○ ໂດຍຜ່ານປະສິດທິພາບສູງສຸດຂອງໂຄງສ້າງອຸດສະຫະກຳໃນທົ່ວພາກພື້ນແມ່ນ້ຳຂອງ, ວິໄສທັດ ທີ່ປະເທດຍີ່ປຸ່ນ ແລະ ບັນດາປະເທດແມ່ນ້ຳຂອງ ມີເປົ້າໝາຍດຽວກັນແມ່ນ ສັງຄົມທີ່ປະຊາຊົນທຸກຄົນໃນອະນຸພາກພື້ນແມ່ນ້ຳຂອງ ສາມາດມີຄວາມສຸກກັບ " ຊີວິດທີ່ມີຄວາມຈະເລີນຮຸ່ງເຮືອງ ", ໃນຂະນະທີ່ວັດທະນະທຳ, ຮີດຄອງປະເພນີ ແລະ ສະພາບແວດລ້ອມຕາມທຳມະຊາດ ຍັງຄົງຢູ່ ແລະ ໄດ້ຮັບການອະນຸລັກ, ຄຽງຄູ່ກັບການພັດທະນາອຸດສະຫະກຳ ທີ່ນຳໄປສູ່ ຄຸນນະພາບຊີວິດທີ່ດີຂຶ້ນກວ່າເກົ່າ ແລະ ມີຄວາມຮັບຜິດຊອບໃນການບໍລິໂພກ.

○ ທົ່ວໜ່ວຍທຸລະກິດ ແລະ ລັດຖະບານຂອງປະເທດຍີ່ປຸ່ນ ຈະສືບຕໍ່ໃຫ້ການຮ່ວມມືດ້ານເສດຖະກິດ ກັບ ບັນດາປະເທດແມ່ນ້ຳຂອງ ເພື່ອເຊື່ອມຕໍ່ຫຼຸດຜ່ອນຄວາມແຕກໂຕນໃນປະຈຸບັນ ລະຫວ່າງ ປະເທດ ແລະ ຕົວເມືອງ, ບົນພື້ນຖານ ຄວາມເຊື່ອທີ່ວ່າ ຄວາມເຕີບໂຕທີ່ດຸ່ນດ່ຽງ ແລະ ສະເໝີພາບ ທີ່ປະກອບສ່ວນເຂົ້າໃນການພັດທະນາ ແລະ ການຈະເລີນຮຸ່ງເຮືອງຂອງ ປະເທດຍີ່ປຸ່ນ ກໍ່ຄື ບັນດາປະເທດແມ່ນ້ຳຂອງ.

## 4. ທິດທາງດ້ານນະໂຍບາຍ

- ເພື່ອກ້າວໄປສູ່ ການຮ່ວມມືຢ່າງເລິກເຊິ່ງ ທີ່ເປັນປະໂຫຍດແກ່ທັງສອງຝ່າຍ ແລະ ການຂະຫຍາຍຕ່ອງໂສ້ອຸບປະທານ ໃນອະນຸພາກພື້ນແມ່ນ້ຳຂອງ, 1) ການຮ່ວມມືກັບປະເທດໃກ້ຄຽງ, 2) ສ້າງພື້ນຖານ ສຳລັບ ໂຄງສ້າງອຸດສະຫະກຳທີ່ທັນສະໄໝ, ແລະ 3) ການສ້າງຄວາມເຂັ້ມແຂງໃຫ້ພື້ນຖານໂຄງລ່າງ ແລະ ຊັບພະຍາກອນທີ່ສະໜັບສະໜູນຕ່ອງໂສ້ມູນຄ່າລະດັບພາກພື້ນ ແມ່ນມີຄວາມຈຳເປັນ. ຄວາມພະຍາຍາມໃນທົ່ວພາກພື້ນດັ່ງກ່າວນີ້ ຈະໄດ້ຮັບການຈັດຕັ້ງປະຕິບັດ ພາຍໃນປີ 2020 ແລະ ອັດຕາການເຕີບໂຕຂອງ GDP ຄາດວ່າຈະ ມີຈຳນວນເພີ່ມຂຶ້ນເຖິງ 20 ຕື້ໂດລາສະຫະລັດ ໃນອະນຸພາກພື້ນແມ່ນ້ຳຂອງ ຊຶ່ງເປັນຜົນອອກອັນໜຶ່ງຂອງວິໄສທັດດັ່ງກ່າວນີ້ (ເທົ່າກັບ 2.0% ຂອງ GDP ທັງໝົດໃນອະນຸພາກພື້ນແມ່ນ້ຳຂອງ). ຈາກນັ້ນ, ອະນຸພາກພື້ນ ສາມາດມີບົດບາດສຳຄັນ ເປັນຈຸດໃຈກາງຂອງເຄືອຄ່າຍຕ່ອງໂສ້ມູນຄ່າທະວີບອາຊີ, ແລະ ສ້າງພື້ນຖານ ສຳລັບ ຄວາມເຕີບໂຕທາງດ້ານເສດຖະກິດ ທີ່ມີຜົນປະໂຫຍດທາງເສດຖະກິດ ແກ່ສອງປະເທດເສດຖະກິດຍັກໃຫ່ຍ ທີ່ມີການຂະຫຍາຍຕົວຢ່າງວ່ອງໄວ ທີ່ເປັນເພື່ອນບ້ານກັບພວກເຮົາ ນັ້ນກໍ່ຄື ປະເທດຈີນ ແລະ ອິນເດຍ.

- ລັດຖະບານປະເທດຍີ່ປຸ່ນ ຈະສືບຕໍ່ໃຫ້ການສະໜັບສະໜູນ ແລະ ຮັດແໜ້ນການຮ່ວມມື ກັບ ລັດຖະບານຕ່າງໆຂອງບັນດາປະເທດແມ່ນ້ຳຂອງ ໃນຂົງເຂດວຽກງານການພັດທະນານະໂຍບາຍດ້ານອຸດສະຫະກຳ ເພື່ອຈັດຕັ້ງປະຕິບັດວິໄສທັດໃຫ້ປະກົດຜົນເປັນຈິງ ແລະ ເພື່ອແກ້ໄຂບັນຫາດ້ານອຸດສະຫະກຳ ທີ່ແຕ່ລະປະເທດກຳລັງປະເຊີນໜ້າ (ເຊັ່ນ: ຍຸດທະສາດການຫັນປ່ຽນອຸດສະຫະກຳຂອງ ປະເທດຫວຽດນາມ).

### (1) ການຮ່ວມມືກັບປະເທດໃກ້ຄຽງ

### <ການປັບປຸງໂຄງສ້າງການຄ້າ>

ຄວາມອາດສາມາດໃນການແຂ່ງຂັນທາງດ້ານອຸດສະຫະກຳ ຂອງອະນຸພາກພື້ນແມ່ນ້ຳຂອງ ຄວນຈະໄດ້ຮັບການປັບປຸງ ໃຫ້ສອດຄ່ອງກັບພາກພື້ນອື່ນໆ ເພື່ອກາຍເປັນຖານການຜະລິດ ແລະ ຖານການສົ່ງອອກ ຂອງທົ່ວທະວີບອາຊີ, ໂດຍຜ່ານການການຄວາມເຂັ້ມແຂງຈາກ AEC ແລະ RCEP.

ນະໂຍບາຍລະດັບພາກພື້ນ ກ່ຽວກັບ ການຄ້າຂ້າມແດນ ຄວນຈະເປັນເອກະພາບກັນ ພາຍໃນບັນດາປະເທດແມ່ນ້ຳຂອງ ເພື່ອສ້າງຕ່ອງໂສ້ມູນຄ່າຂອງພາກພື້ນ ໃຫ້ກ້າວໄປເປັນຕ່ອງໂສ້ມູນຄ່າຂອງໂລກ, ແລະ ທັງເປັນການສະໜັບສະໜູນການເຄື່ອນຍ້າຍສິນຄ້າ ລະຫວ່າງ ປະເທດໃນອະນຸພາກພື້ນໃຫ້ມີຄວາມສະດວກ ແລະ ວ່ອງໄວຂຶ້ນ.

ການບັງຄັບໃຊ້ນະໂຍບາຍ ທີ່ດຶງດູດເອົາອຸດສະຫະກຳທີ່ນຳໃຊ້ຈຸດແຂງຂອງແຕ່ລະປະເທດ ຄວນຈະໄດ້ຮັບບຸລິມະສິດ ເພື່ອສ້າງອຸດສະຫະກຳສົ່ງອອກຢ່າງມີຍຸດທະສາດ, ການເຊື່ອມໂຍງຕ່ອງໂສ້ມູນຄ່າໃນທົ່ວພາກພື້ນ, ແລະ ການສ້າງສາຍພົວພັນເພິ່ງພາອາໄສກັນ ລະຫວ່າງ ແຕ່ລະປະເທດ (ຕົວຢ່າງ: ການພັດທະນາ ແລະ ການອອກໃບ

ຢັ້ງຢືນດ້ານມາດຕະຖານ, ການກໍ່ສ້າງລະບົບແຊ່ເຢັນມາດຕະຖານລະດັບໂລກ ແລະ ການເສີມສ້າງຄວາມອາດສາມາດ).

ນອກນັ້ນ, ຄວາມພະຍາຍາມຮອບດ້ານຄວນຈະໄດ້ຮັບການຈັດຕັ້ງປະຕິບັດ ເພື່ອພັດທະນາ "ອຸດສະຫະກຳໃໝ່" (ເຊັ່ນ: ການເບິ່ງແຍງສຸຂະພາບ, ອຸດສະຫະກຳຄວາມເພິ່ງພໍໃຈ, ສີຂຽວ ແລະ ພະລັງງານ, ແລະ ການສ້າງຄວາມພ້ອມ) ທີ່ຊ່ວຍຕອບສະໜອງຕາມສິ່ງທ້າທາຍທາງສັງຄົມ ທີ່ບັນດາປະເທດແມ່ນ້ຳຂອງ ກຳລັງປະເຊີນໜ້າ.

## <ການສົ່ງເສີມ FDI ໂດຍຜ່ານ SEZ>

ເພື່ອສົ່ງເສີມ ຄວາມອາດສາມາດໃນການແຂ່ງຂັນ ຂອງເຂດນະຄອນຫຼວງ ແລະ ເຂດ **SEZ** ຢູ່ຊາຍແດນ ສຳລັບນັກລົງທຶນຂອງປະເທດຍີ່ປຸ່ນ, ລາຍລະອຽດຂໍ້ມູນຈະໄດ້ຮັບການສະໜອງ ພ້ອມກັບໂຕະສະໜັບສະໜູນ, ໂດຍຜ່ານການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງ ເຊັ່ນ: **JETRO** ແລະ ສູນອາຊຽນ-ຍີ່ປຸ່ນ.

ກ່ຽວກັບ ການພັດທະນາເຂດ **SEZ** ຢູ່ຊາຍແດນ, ການຮ່ວມມື ແລະ ຄວາມຊຳນານຂອງເຂດ **SEZ** ຂອງປະເທດໄທ ແລະ ເຂດ **SEZ** ຢູ່ປະເທດກຳປູເຈຍ, ລາວ ແລະ ມຽນມ້າ ຄວນຈະໄດ້ຮັບການພິຈາລະນາຢ່າງລະອຽດ ແລະ ສົນທະນາຮ່ວມກັນຢ່າງເລິກເຊິ່ງ ລະຫວ່າງ ປະເທດເຫຼົ່ານີ້ ເພື່ອບັນລຸຍຸດທະສາດ **"Win-win"** ສຳລັບໝົດທຸກພາກສ່ວນທີ່ກ່ຽວຂ້ອງ. ຕົວຢ່າງ: ໃນການສົນທະນາ ລະຫວ່າງ ລັດຖະບານ - ພາກອຸດສະຫະກຳ ຢູ່ປະເທດກຳປູເຈຍ ແລະ ປະເທດລາວ, ລັດຖະບານໄທ ໄດ້ຖືກຮ້ອງຂໍໃຫ້ແກ້ໄຂບັນຫາຄວາມໜາແໜ້ນຂອງດ່ານຊາຍແດນ ໂດຍການປັບປຸງສູນການຂົນສົ່ງສິນຄ້າ, ຫຼື ເພື່ອປັບປຸງຄຸນນະພາບຊີວິດ ຢູ່ຕາມເຂດຊາຍແດນ ໂດຍການສ້າງສິ່ງອຳນວຍຄວາມສະດວກດ້ານບ່ອນຢູ່ອາໄສ ແລະ ດ້ານການຄ້າ.

## <ການຮ່ວມມືທຸລະກິດທ້ອງຖິ່ນ>

ການຮ່ວມມືທາງດ້ານທຸລະກິດ ຄວນຈະໄດ້ຮັບການປັບປຸງ ໂດຍການສ້າງ ແລະ ບັງຄັບໃຊ້ກົດລະບຽບ **M&A** ແລະ ຫຼັກການບັນຊີ ທີ່ມີຄວາມໂປ່ງໃສ, ການສົ່ງເສີມການຮ່ວມມື ເພື່ອພັດທະນາຕະຫຼາດຮຸ້ນ ແລະ ສິນເຊື່ອ, ແລະ ໂດຍການສ້າງພື້ນຖານອັນດຽວກັນ ສຳລັບ ວຽກງານອື່ນໆ ລະຫວ່າງ ອະນຸພາກພື້ນ ແລະ ປະເທດຍີ່ປຸ່ນ ບົນພື້ນຖານລະບຽບກົດໝາຍຂອງແຕ່ລະປະເທດ. ການເສີມສ້າງຄວາມສາມາດ ແລະ ການແລກປ່ຽນຂໍ້ມູນຂ່າວສານຄວນຈະໄດ້ຮັບການກະຕຸກຊຸກຍູ້ ເພື່ອໃຫ້ສາມາດບັນລຸເປົ້າໝາຍເຫຼົ່ານີ້. ງານວາງສະແດງທາງດ້ານການຄ້າ, ການເດີນທາງຢ້ຽມຢາມທາງດ້ານການຄ້າ ແລະ ກອງປະຊຸມສຳມະນາການຄ້າແບບສອງຝ່າຍ ຄວນຈະໄດ້ຮັບການສົ່ງເສີມ ເພື່ອສະໜອງກາລະໂອກາດຈັບຄູ່ທຸລະກິດ ສຳລັບ ນັກລົງທຶນຕ່າງປະເທດ ເປັນຕົ້ນແມ່ນ ບໍລິສັດ **SME** ຈາກປະເທດຍີ່ປຸ່ນ ແລະ ວິສະຫະກິດທ້ອງ ພາຍໃນອະນຸພາກພື້ນ.

**(2) ການສ້າງພື້ນຖານ ສໍາລັບ ໂຄງສ້າງອຸດສະຫະກໍາທີ່ທັນສະໄໝ**

**<ການພັດທະນາ R&D>**

ຄວາມພະຍາຍາມດໍາເນີນວຽກງານ **R&D** ຄວນຈະໃຊ້ເຂົ້າໃນການພັດທະນາຜະລິດຕະພັນ ທີ່ບັນດາປະເທດແມ່ນ້ໍາຂອງ ນໍາໃຊ້ຄວາມໄດ້ປຽບຂອງຕົນ "ທີ່ສອດຄ່ອງກັບຖານການຜະລິດ", ການສາທິດ ທີ່ທ້າທາຍຕໍ່ວຽກງານການສ້າງສັງຄົມໃຫ້ມີຄວາມຍືນຍົງ ແລະ ອຸດສະຫະກໍາທີ່ທັນສະໄໝ ທີ່ບົນຢູ່ບົນພື້ນການລັກສະນະຂອງແມ່ນ້ໍາຂອງ, ຫຼື ສິ່ງທ້າທາຍ ທີ່ບັນດາປະເທດແມ່ນ້ໍາຂອງ ປະເຊີນໜ້າໃນປະຈຸບັນ ລວມມີ ໄພພິບັດທາງທໍາມະຊາດ , ການປ່ຽນແປງດິນຟ້າອາກາດ, ການນໍາໃຊ້ພະລັງງານ/ນ້ໍາຢ່າງບໍ່ມີປະສິດທິພາບ, ແລະ ການເອື່ອຍອີງໃສ່ເຊື້ອເພີງແຮ່ທາດ **(fossil fuel).**

ຫຼັກສູດການຮຽນ ແລະ ການລົງຝຶກງານ ຄວນຈະໄດ້ຮັບການສ້າງຂຶ້ນ ໂດຍສົມທົບກັບມະຫາວິທະຍາໄລ ແລະພາກອຸດສຫະກໍາຂອງປະເທດຍີ່ປຸ່ນ ເພື່ອພັດທະນາໃຫ້ກໍາລັງແຮງງານ ແລະ ຜູ້ຈັດການ ມີທັກສະສູງຂຶ້ນກວ່າເກົ່າໃນດ້ານວິທະນາສາດ ແລະ ວິສະວະກໍາ. ການລົງທຶນໃສ່ວຽກງານພັດທະນາຜະລິດຕະພັນ ຄວນຈະຖືກເອົາໃຈໃສ່ຫຼາຍກວ່າເກົ່າ ເພື່ອໃຫ້ການພັດທະນາຜະລິດຕະພັນ ຕອບສະໜອງຄວາມຕ້ອງການຂອງ ຜູ້ບໍລິໂພກຊັ້ນສູງ ແລະ ຕະຫຼາດຂະໜາດໃຫ່ຍ ແລະ ສອດຄ່ອງກັບອຸດສະຫະກໍາການຜະລິດ.

**<ຄວາມອາດສາມາດໃນການແຂ່ງຂັນ ຂອງບໍລິສັດ SME>**

ໂດຍຜ່ານການຈັດຕັ້ງປະຕິບັດ "ແຜນດໍາເນີນງານອາຊຽນລະດັບຍຸດທະສາດ ເພື່ອການພັດທະນາບໍລິສັດ **SME 2016-2025"** ຢ່າງຕັ້ງໜ້າ, ວຽກງານຍົກລະດັບຂີດຄວາມສາມາດໃຫ້ **SME** ເພື່ອໃຫ້ມີນະວະຕະກໍາໃໝ່ ແລະມີລະດັບສາກົນ ຄວນຈະໄດ້ຮັບການສົ່ງເສີມ.

**(3) ການຍົກລະດັບຂີດຄວາມສາມາດ ພື້ນຖານໂຄງລ່າງ ແລະ ຊັບພະຍາກອນ ທີ່ສະໜັບສະໜູນຕ່ອງໂສ້ມູນຄ່າລະດັບພາກພື້ນ**

**<ການເຊື່ອມໂຍງລະດັບພາກພື້ນ>**

ວຽກງານເຊື່ອມໂຍງ ຄວນຈະໄດ້ຮັບການປັບປຸງ, ໂດຍສະເພາະແມ່ນ ວຽກງານພັດທະນາແລວເສດຖະກິດຕາເວັນຕົກ - ຕາເວັນອອກ, ແລວເສດຖະກິດພາກໄຕ້, ແລະ ເຊື່ອມໂຍງພາກເໜືອ ແລະ ພາກໄຕ້ຂອງຫວຽດນາມເຂົ້າກັບອະນຸພາກພື້ນແມ້ນ້ໍາຂອງ. ເວົ້າສະເພາະ, ບຸລິມະສິດສໍາຄັນ ຄວນຈະຖືກກໍານົດຂຶ້ນ ກ່ຽວກັບ ການປັບປຸງວຽກງານເຊື່ອມໂຍງ ແລວເສດຖະກິດຕາເວັນຕົກ-ຕາເວັນອອກ ແລະ ແລວເສດຖະກິດພາກໄຕ້ ກັບປະເທດມຽນມ້າ, ໂດຍແນໃສ່ການເຂົ້າເຖິງທ່າເຮືອທະເລນ້ໍາເລິກ ເຊິ່ງຈະຊ່ວຍໃຫ້ພວກເຮົາ ສາມາດເຂົ້າເຖິງປະເທດອິນເດຍ ແລະ ຕາເວັນອອກກາງ ໄດ້ຫຼາຍຂຶ້ນກວ່າເກົ່າ.

ວຽກງານສ້າງຕັ້ງຕ່ອງໂສ້ມູນຄ່າຂ້າມແດນ ຮຽກຮ້ອງເຖິງການຫຼຸດຜ່ອນຕົ້ນທຶນທາງການຄ້າ ບໍ່ພຽງແຕ່ຕົ້ນທຶນທາງການເງິນ ແຕ່ຍັງແມ່ນຕົ້ນທຶນທາງເວລາ ແລະ ຄວາມເຊື່ອໝັ້ນຂອງລະບົບຂົນສົ່ງສິນຄ້າ. ອີງຕາມປະເດັນທີ່ກ່າວໄວ້ຂ້າງເທິງນັ້ນ, ຄວາມພະຍາຍາມຮອບດ້ານ ຄວນຈະໄດ້ຮັບການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນວຽກງານຂ້າງລຸ່ມນີ້:

- ເພື່ອໃຫ້ຕອບສະໜອງຕາມຄວາມຕ້ອງການ ດ້ານການພັດທະນາພື້ນຖານໂຄງລ່າງ ທີ່ມີຈຳນວນມະຫາສານ ໃນບັນດາປະເທດແມ່ນ້ຳຂອງ, ປະເທດຍີ່ປຸ່ນ ສົ່ງເສີມ "ການລົງທຶນໃສ່ພື້ນຖານໂຄງລ່າງທີ່ມີຄຸນນະພາບ" ໂດຍການຮ່ວມມືກັບປະເທດເພື່ອນມິດ, ອົງການຈັດຕັ້ງສາກົນອື່ນໆ ເຊັ່ນ: ທະນາຄານພັດທະນາອາຊີ (ເອດີບີ) ແລະ ສະຖາບັນການເງິນອື່ນໆ, ບໍ່ພຽງແຕ່ ການເງິນພາກລັດເທົ່ານັ້ນ ແຕ່ວ່າຍັງກວມເອົາການພັດທະນາ ແລະ ປັບປຸງກົນໄກ ທີ່ດຶງດູດການລົງທຶນຂອງພາກເອກະຊົນໃສ່ຂະແໜງພື້ນຖານໂຄງລ່າງ ພາຍໃຕ້ນະໂຍບາຍ "ການຮ່ວມມື ເພື່ອພື້ນຖານໂຄງລ່າງທີ່ມີຄຸນນະພາບ: ການລົງທຶນ ເພື່ອອານາຄົດຂອງອາຊີ" ເຊິ່ງທ່ານນາຍົກລັດຖະມົນຕີ ອາເບ ໄດ້ປະກາດໄວ້ໃນເດືອນພຶດສະພາ 2015 ທີ່ຜ່ານມານີ້.

- ເປັນເຈົ້າພາບກອງປະຊຸມສຳມະນາ ຮ່ວມກັບເຈົ້າໜ້າທີ່ ຈາກພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບຟັງທັດສະນະຂອງນັກລົງທຶນ ກ່ຽວກັບ ບັນຫາຕ່າງໆ ທີ່ຄິດພັນກັບການຂົນສົ່ງສິນຄ້າ ໃນອະນຸພາກພື້ນແມ່ນ້ຳຂອງ ແລະ ສົນທະນາຮ່ວມກັນ ກ່ຽວກັບ ວິທີການແກ້ໄຂບັນຫາດັ່ງກ່າວນັ້ນ ເປັນຕົ້ນແມ່ນ ສິ່ງທ້າທາຍດ້ານ CBTA,

- ສົ່ງເສີມສິ່ງອຳນວຍຄວາມສະດວກທາງດ້ານຄ້າ ໂດຍຜ່ານຍົກລະດັບ ລະບົບສ່ວຍສາອາກອນ ໃຫ້ທັນສະໄໝ,

- ການລົງທຶນ ເພື່ອກຳນົດທາງເລືອກ ສຳລັບ ການນຳໃຊ້ຮູບແບບການຂົນສົ່ງໃຫ້ມີປະສິດທິພາບສູງສຸດ (ເຊັ່ນ: ການຂົນສົ່ງທາງບົກ, ທາງທະເລ, ການອາກາດ) ບົນພື້ນຖານຕົ້ນທຶນ / ປະສິດທິພາບທາງດ້ານພະລັງງານ.

## <ປະລິມານພະລັງງານ ແລະ ສິ່ງແວດລ້ອມ>

- ແຜນການ ກ່ຽວກັບ ພະລັງງານ ແລະ ໄຟຟ້າທີ່ເໝາະສົມ ທີ່ພິຈາລະນາເອົາການປະສົມປະສານ ລະຫວ່າງ ພະລັງງານປະເພດຕ່າງໆ, ຄຽງຄູ່ກັບການຮັກສາປະສິດທິພາບສູງສຸດ ແລະ ການອະນຸລັກສິ່ງແວດລ້ອມ ຄວນຈະໄດ້ຮັບການສ້າງຕັ້ງຂຶ້ນ, ເພື່ອໃຫ້ເກີດຄວາມດຸ່ນດ່ຽງຢ່າງມີສະຖຽນລະພາບ ລະຫວ່າງ ຄວາມຕ້ອງການ ແລະ ປະລິມານພະລັງງານ ໃນແຕ່ລະປະເທດ. ການສະໜອງພະລັງງານຂ້າມແດນແບບຮ່ວມມືກັນ ບົນພື້ນຖານຕາຄ່າຍໄຟຟ້າອາຊຽນ ອາດຈະເປັນໜຶ່ງທາງເລືອກທີ່ດີ; ແຜນການກ່ຽວກັບການເຊື່ອມຕໍ່ຕາຄ່າຍໄຟຟ້າໃນພາກພື້ນ ທີ່ກຳນົດໄວ້ໃນກອງປະຊຸມ HAPUA (ຫົວໜ້າອົງ

ການຈັດຕັ້ງພະລັງງານອາຊຽນ) ຄວນຈະໄດ້ຮັບການຈັດຕັ້ງປະຕິບັດ ເປັນທາງເລືອກໜຶ່ງ ສໍາລັບ ວຽກງານນີ້.

- ເພື່ອແນໃສ່ສະໜອງພະລັງງານໃນລະດັບພາກພື້ນ, ໂຮງງານຜະລິດພະລັງງານປະເພດຕ່າງໆ ຄວນໄດ້ຮັບການສ້າງຕັ້ງຂຶ້ນ ເພື່ອບັນລຸ ການປະສົມປະສານກັນຂອງພະລັງງານແຕ່ລະປະເພດ ໃຫ້ຫຼາກຫຼາຍເທົ່າທີ່ຈະເປັນໄປໄດ້. ການຈັດຕັ້ງປະຕິບັດໂຄງການຜະລິດພະລັງງານ ດັ່ງທີ່ກໍານົດໄວ້ໃນ ກອບການລົງທຶນໃນພາກພື້ນ GMS (RIF) ແລະ ການສ້າງສູນປະສານງານດ້ານພະລັງງານລະດັບພາກພື້ນ (RPCC) ແມ່ນເນື້ອໃນຕົ້ນຕໍ ເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານພະລັງງານ ພາຍໃນພາກພື້ນ. ກ່ຽວກັບ ໂຮງງານຜະລິດພະລັງງານ ແຕ່ລະແຫ່ງ, ຍັງມີມີຄວາມຈໍາເປັນທີ່ຈະສົ່ງເສີມການລົງທຶນ ໃນພື້ນຖານໂຄງລ່າງທີ່ມີຄຸນນະພາບສູງ ທີ່ມີກໍາລັງການຜະລິດສູງກວ່າເກົ່າ ເຊັ່ນ: ໂຮງງານຜະລິດພະລັງງານຖ່ານຫີນ ທີ່ມີປະສິດທິພາບສູງ, ສໍາລັບ ເປົ້າໝາຍ ເພື່ອຍົກລະດັບຄວາມໝັ້ນທ່ຽງທາງດ້ານພະລັງງານ, ແລະ ການປະກອບສ່ວນເຂົ້າໃນການຫຼຸດຕົ້ນທຶນການຜະລິດເຊື້ອໄຟ ພ້ອມທັງເປັນການຫຼຸດຜ່ອນບັນຫາການປ່ຽນແປງຂອງສະພາບດິນຟ້າອາກາດ.

- ການລົງທຶນດ້ານສິ່ງແວດລ້ອມ ຄວນຈະໄດ້ຮັບການປັບປຸງ ເພື່ອສ້າງສະຖຽນລະພາບ ໃຫ້ວຽກງານພັດທະນານໍ້າມັນ ແລະ ອາຍແກດສ໌, ໂດຍຜ່ານຂັ້ນຕອນທີ່ມີຄວາມວ່ອງໄວ ພ້ອມທັງເປັນການສ້າງຄວາມໝັ້ນທ່ຽງໃຫ້ການຄຸ້ມຄອງສະຖາບັນພາຍໃນປະເທດ ອີກດ້ວຍ.

- ມາດຕະການນະໂຍບາຍທີ່ເຂັ້ມແຂງ ແນ່ໃສ່ສົ່ງເສີມ EE&C, ພະລັງງານທາງເລືອກ ແລະ ຕາຄ່າຍໄຟຟ້າ ທີ່ທັນສະໄໝ/ຊຸມຊົນສະຫຼາດ ຄວນຈະໄດ້ຮັບການສົ່ງເສີມຫຼາຍກວ່າເກົ່າ.

- ໃນຂະນະດຽວກັນ, ການສົ່ງເສີມອຸດສະຫະກໍາ ຄວນຈະສະໜັບສະໜູນວຽກງານການພັດທະນາອຸດສາຫະກໍາທີ່ເປັນມິດຕໍ່ລະບົບນິເວດ ແລະ ມີຄວາມຍືນຍົງ.

- ຄວາມພະຍາຍາມໃນການປ້ອງການໄພພິບັດ ຄວນຈະພິຈາລະນາ ກ່ຽວກັບ ການສ້າງຕັງຕ່ອງໂສ້ອຸປະທານຄວາມກຽມພ້ອມ.

<ການພັດທະນາຊັບພະຍາກອນມະນຸດ (HRD)>

ປະເທດໄທ ມີກຸ່ມອຸດສະຫະກໍາທີ່ໃຫ່ຍທີ່ສຸດໃນອະນຸພາກພື້ນແມ່ນໍ້າຂອງ, ແລະ ສາມາດກາຍເປັນສູນກາງການພັດທະນາຊັບພະຍາກອນມະນຸດໃນອະນາຄົດ, ແລະ ສາມາດປະກອບສ່ວນເຂົ້າໃນວຽກງານ HRD ລະດັບພາກພື້ນ ໂດຍການສະໜອງ ແລະ ແລກປ່ຽນບົດຮຽນທີ່ດີ. ແນໃສ່ສະໜອງຊັບພະຍາກອນມະນຸດທີ່ຈໍາເປັນຢ່າງຕໍ່ເນື່ອງ ສໍາລັບ ການຫັນປ່ຽນອຸດສະຫະກໍາໃນແຕ່ລະປະເທດ, ພວກສ່ວນກ່ຽວຂ້ອງ ຄວນຈັດຕັ້ງປະຕິບັດວຽກງານ ຂ້າງລຸ່ມນີ້:

- ເພື່ອສ້າງນະໂຍບາຍ **HRD** ຢ່າງມີປະສິດທິພາບ, ຂັ້ນຕອນການພັດທະນາຊັບພະຍາກອນມະນຸດຂອງແຕ່ລະປະເທດ ໃນປະຈຸບັນ ຄວນຈະໄດ້ຮັບການປະເມີນຜົນ ຢ່າງເໝາະສົມ, ເຊິ່ງຄວນຈະຢູ່ບົນພື້ນຖານນະໂຍບາຍ **HRD** ແບບຮອບດ້ານ ເພື່ອແກ້ໄຂບັນຫາສະເພາະ ໃນແຕ່ລະປະເທດ ຄວນຈະໄດ້ຮັບການກຳນົດຂຶ້ນ.

- ວຽກງານຕ່າງໆ ຄວນຈະເນັ້ນໜັກໃສ່ ໂຄງການຂອງລັດຖະບານ ເພື່ອປັບປຸງການສຶກສາຂັ້ນພື້ນຖານ ແລະ ການສຶກສາຊັ້ນສູງ ເປັນຕົ້ນແມ່ນ ການສະໜັບສະໜູນມະຫາວິທະຍາໄລແຖວໜ້າ (ໂດຍສະເພາະແມ່ນສາຂາວິຊາວິສະວະກຳສາດ) ແລະ **AUN/SEED-Net** (ເຄື່ອຄ່າຍມະຫາວິທະຍາໄລອາຊຽນ / ເຄື່ອຄ່າຍການພັດທະນາການສຶກສາວິສະວະກຳສາດ ໃນອາຊີ),

  ການຝຶກອົບຮົມອະຊີວະສຶກສາ ທີ່ຮັບເອົານັກສຶກສາຕ່າງປະເທດ ຈາກປະເທດອ້ອມຂ້າງ ໂດຍລັດຖະບານ ແລະ ພາກອຸດສະຫະກຳແຖວໜ້າຂອງປະເທດ ໃນອະນຸພາກພື້ນ (ເຊັ່ນ: ປະເທດໄທ) ຄວນຈະໄດ້ຮັບການປັບປຸງໃຫ້ເຂັ້ມແຂງ, ໃນຂະນະດຽວກັນ, ວຽກງານການສະໜອງການຝຶກອົບຮົມໃນໜ້າວຽກຕົວຈິງ ກ່ຽວກັບ ທັກສະໃນການດຳເນີນທຸລະກິດ ແລະ ຈັນຍາບັນ ໂດຍນັກລົງທຶນຕ່າງປະເທດ ຄວນຈະໄດ້ຮັບການເອົາໃຈໃສ່ຢ່າງເໝາະສົມ ຍ້ອນວ່າ ວຽກງານນີ້ ແມ່ນຮູບແບບທີ່ມີປະສິດທິພາບສູງສຸດ ສຳລັບ ການພັດທະນາຊັບພະຍາກອນມະນຸດ.

- ເຄື່ອຄ່າຍການຝຶກອົບອະຊີວະຊັ້ນສູງ ຄວນຈະໄດ້ຮັບການສ້າງຂຶ້ນ ເພື່ອສະໜອງຊັບພະຍາກອນມະນຸດທີ່ມີສີມື ໂດຍນຳໃຊ້ປະສົບການຈາກປະເທດຍີ່ປຸ່ນ ພາຍໃຕ້ເຄືອຄ່າຍ **APEN** (ເຄືອຄ່າຍການສຶກສາວິຊາຊີບອາຊີ).

- ໂດຍການຮ່ວມມືກັບສະຖາບັນທີ່ກ່ຽວຂ້ອງ ເຊັ່ນ: ອົງການ **JICA, JETRO**, ສູນອາຊຽນ-ຍີ່ປຸ່ນ, ເອດີບີ ແລະ ອົງການ **ERIA**, ສະມາຊິກແມ່ຂອງ-ຍີ່ປຸ່ນ ຈະຮັດແໜ້ນການຮ່ວມມື ເພື່ອສ້າງ “ແຜນງານ”, ເປັນຕົ້ນແມ່ນ ກິດຈະກຳສະເພາະ ແລະ ຄາດໝາຍໄລຍະເວລາ ເພື່ອຈັດຕັ້ງຕິບັດວິໄສທັດການພັດທະນາ ດ້ານອຸດສະຫະກຳໃນພາກພື້ນແມ່ນ້ຳຂອງໃຫ້ປະກົດຜົນເປັນຈິງ. ແຜນງານຈະຖືກນຳສະເໜີ ໃນກອງປະຊຸມປຶກສາຫາລື ກ່ຽວກັບ ອຸດສະຫະກຳ ລະຫວ່າງ ລັດຖະບານຂອງບັນດາປະເທດແມ່ນ້ຳຂອງ - ລັດຖະບານຍີ່ປຸ່ນ ແລະ ກອງປະຊຸມລັດຖະມົນຕີຝ່າຍເສດຖະກິດ ລະຫວ່າງ ລັດຖະບານຂອງບັນດາປະເທດແມ່ນ້ຳຂອງ - ລັດຖະບານຍີ່ປຸ່ນ ທີ່ຈະຈັດຂຶ້ນໃນປີ **2016**. ຄວາມຄືບໜ້າປະຈຳປີ ກ່ຽວກັບ ການຈັດຕັ້ງປະຕິບັດແຜນງານດັ່ງກ່າວນີ້ ຈະໄດ້ຮັບການລາຍງານ ໃນກອງປະຊຸມລັດຖະມົນຕີຝ່າຍເສດຖະກິດ ທີ່ຈະຈັດຂຶ້ນ ໃນໄລຍະຕໍ່ໄປ.